# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

24-31 ສິງຫາ 2024

ປີທີ 13

ສະບັບທີ 983

ລາຍສັປະດາ


## ກອງປະຊຸມຮ່ວມລະຫວ່າງ ຄປຈສພຊ ແລະ ຄລບ



(ສພຊ) - ວັນທີ 13 ສິງຫາ 2024 ທີ່ຫ້ອງປະຊຸມຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ໄດ້ມີກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານ (ຄລບ) ຄັ້ງທີ 1 ປະຈຳປີ 2024 ໂດຍການເປັນປະທານຮ່ວມຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ ແລະ ທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ; ມີບັນດາທ່ານຮອງປະທານ ຄປຈສພຊ, ຮອງນາຍົກລັດຖະມົນຕີ, ກຳມະການຄະນະປະຈຳສະພາແຫ່ງຊາດ, ສະມາຊິກລັດຖະບານ, ປະທານອົງການກວດສອບແຫ່ງລັດ, ຮອງປະທານອົງການກວດກາແຫ່ງລັດແລະແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ອ່ານຕໍ່ໜ້າ 8




## ປາຖະກະຖາວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 33 ປີ



(ສພຊ) - ເພື່ອສະເຫຼີມສະຫຼອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 33 ປີ (15/8/1991-15/8/2024) ເຊິ່ງເປັນກິດຈະກຳໜຶ່ງ ທີ່ ມີຄວາມໝາຍສຳຄັນໃນການຫວນຄືນເຖິງຂະບວນການສ້າງ ແລະປັບປຸງກໍ່ຄືການເຕີບໃຫຍ່ຂະຫຍາຍຕົວຂອງລັດຖະທຳມະນູນແຫ່ງສປປລາວໃນໄລຍະຜ່ານມາ, ສະພາແຫ່ງຊາດ (ສພຊ) ຈຶ່ງໄດ້ຈັດພິທີປາຖະກະຖາວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 33 ປີ ໃນຕອນເຊົ້າວັນທີ 14 ສິງຫາຜ່ານມາ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ມີບັນດາທ່ານ

ອ່ານຕໍ່ໜ້າ 2

## ຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມງານສັປະດາອາຊຽນ-ຈີນ ປະຈຳປີ 2024



ອ່ານຕໍ່ໜ້າ 6

## ສະຫາຍ ສົມມາດ ພົລເສນາ ຮັບການເຂົ້າຢ້ຽມຂໍ່ານັບຂອງປະທານສະພາທີ່ປຶກສາການເມືອງນະຄອນເຊັ່ຍເໝີນ



(ສພຊ) - ຕອນບ່າຍວັນທີ 14 ສິງຫາຜ່ານມາ ທີ່ສະພາແຫ່ງຊາດ, ສະຫາຍ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ເວີ້ຍເຄີ້ຫຼຽງ ປະທານສະພາທີ່ປຶກສາການເມືອງນະຄອນເຊັ່ຍເໝີນ ແຂວງຟູຈ້ຽນ, ສປ ຈີນ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ.

ສະຫາຍ ສົມມາດ ພົລເສນາ ໄດ້ສະແດງຄວາມຍິນດີຕ້ອນຮັບ ພ້ອມທັງຕີລາຄາສູງຕໍ່ການຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ຂອງສະຫາຍ ເວີ້ຍເຄີ້ຫຼຽງ ແລະ ຄະນະໃນຄັ້ງນີ້ ເຊິ່ງເປັນໂອກາດດີໃຫ້ແກ່ສອງພັກ, ສອງລັດ ລາວ ແລະ ຈີນ ໂດຍສະເພາະລະຫວ່າງແຂວງທ້ອງຖິ່ນຂອງສອງປະເທດ ທີ່ໄດ້ມີການພົບປະແລກປ່ຽນຄຳຄິດຄຳເຫັນນຳກັນ ເຊິ່ງເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການພົວພັນແບບຄູ່

ອ່ານຕໍ່ໜ້າ 11

## ພົທ. ສຸວອນ ເລືອງບຸນມີ ເພີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7

(ສພຊ) - ວັນສຸກທີ 16 ສິງຫາຜ່ານມາ, ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ແລະ ຄະນະ ໄດ້ເຄື່ອນໄຫວ ແລະ ຢ້ຽມຢາມກອງບັນຊາການທະຫານອາກາດ ໂດຍການຕ້ອນຮັບຂອງທ່ານ ພົຕ. ຄຳເຫຼັກ ແສງພະຈັນ ຜູ້ບັນຊາການທະຫານອາກາດພ້ອມດ້ວຍການນຳ, ນາຍ ແລະ ພົນທະຫານໃນກອງບັນ



ອ່ານຕໍ່ໜ້າ 8

## ປະທານ ກປຊສ ສຳເລັດການຢ້ຽມຢາມ ແລະ ເຮັດວຽກຢູ່ຫວຽດນາມ



ອ່ານຕໍ່ໜ້າ 8



ຜົນຕົກນ້ຳຖ້ວມ (ໜ້າ 9)



ມາລາວີ... (ໜ້າ 11)




ຫວຽດນາມກັບນະໂຍບາຍ... (ໜ້າ 12)

**ຊົມເຊີຍວັນຍຶດອຳນາດທົ່ວປະເທດ ຄົບຮອບ 49 ປີ (23 ສິງຫາ 1975 - 23 ສິງຫາ 2024) ຢ່າງສຸດໃຈ!**

# ເຝິກອົບຮົມການເປັນວິທະຍາກອນໃຫ້ແກ່ພະນັກງານນຳພາ-ຄຸ້ມຄອງຂັ້ນສູງຂອງ ສພຂ



(ສພຊ)-ເພື່ອເປັນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນດຳເນີນງານຂອງຄະນະປະຈຳສະພາແຫ່ງຊາດ ໄລຍະ 5 ປີ(2021-2025) ໂດຍສະເພາະການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ແລະ ພະນັກງານທີ່ເປັນເສນາທິການ ໃຫ້ມີປະສິດທິຜົນແນໃສ່ຍົກສູງການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງບັນດາກຳມາທິການ, ຄະນະເລຂາທິການ,ສະຖາບັນຄົ້ນຄວ້ານິຕິກຳແລະສະພາປະຊາຊົນຂັ້ນແຂວງ (ສພຂ) ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ແລະ ແຜນການເຄື່ອນໄຫວຂອງແຕ່ລະພາກສ່ວນ ທັງເປັນການພັດທະນາວິທະຍາກອນຂອງ ສພຂ ໃຫ້ເປັນເອກະພາບລວມສູນ ແລະ ລົງເລິກສະເພາະດ້ານ ທັງຮັບປະກັນດ້ານເນື້ອໃນຫົວຂໍ້, ຫຼັກສູດ, ຄູ່ມືການສອນຢ່າງມີຈຸດສຸມ, ຍົກສູງປະສິດທິພາບແລະປະສິດທິຜົນ ໃນການສະເໜີ, ອະທິບາຍເນື້ອໃນບົດຮຽນ ແລະ ການຄົ້ນຄວ້າເອກະສານ ໃຫ້ແກ່ ສສຂ ດີຂຶ້ນກວ່າເກົ່າ; ສະພາແຫ່ງຊາດ ຈຶ່ງໄດ້ຈັດກອງປະຊຸມເຝິກອົບຮົມການເປັນວິທະຍາກອນໃຫ້ແກ່ພະນັກງານນຳພາ-ຄຸ້ມຄອງຂັ້ນສູງຂອງສະພາປະຊາຊົນຂັ້ນແຂວງ ໃນວັນທີ 15-16 ສິງຫາ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ເຂົ້າຮ່ວມມີທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ, ບັນດາທ່ານປະທານ-ຮອງປະທານ ສພຂ ທົ່ວປະເທດ, ຫົວໜ້າ-ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ, ວິທະຍາກອນຮັບເຊີນ, ຄະນະກົມ, ຄະນະພະແນກ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ມີຄຳເຫັນວ່າ: ການເຝິກອົບຮົມເປັນວິທະຍາກອນຄັ້ງນີ້ ເປັນກອງປະຊຸມວິຊາການ ລົງເລິກຫົວຂໍ້ "ເປັນວິທະຍາກອນ"ເຊິ່ງມີຄວາມໝາຍສຳຄັນ ແລະ ຈຳເປັນຢ່າງພາວະວິໄສສຳລັບພະນັກງານນຳພາ-ຄຸ້ມຄອງຂັ້ນສູງຂອງສະພາປະຊາຊົນຂັ້ນແຂວງ ກໍຄືພະນັກງານນຳພາ-ຄຸ້ມຄອງທົ່ວໄປ ຂອງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແລະອົງການຈັດຕັ້ງມະຫາຊົນໃນລະບົບການເມືອງປະຊາທິປະໄຕປະຊາຊົນຂັ້ນຕ່າງໆ; ຍ້ອນວ່າພະນັກງານນຳພາ-ຄຸ້ມຄອງຂອງສະພາປະຊາຊົນຂັ້ນແຂວງ ນອກຈາກມີພາລະບົດບາດເປັນພະນັກງານນຳພາ-ຄຸ້ມຄອງຂອງພັກ, ລັດ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງກໍຄືສະພາປະຊາຊົນຂັ້ນແຂວງແລ້ວ ຍັງປະຕິບັດພາລະບົດບາດເປັນຕົວແທນໃຫ້ແກ່ສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າໃນແຕ່ລະເຂດເລືອກຕັ້ງ. ດັ່ງນັ້ນ, ການເຝິກອົບຮົມການເປັນວິທະຍາກອນຍິ່ງມີບົດບາດສຳຄັນສຳລັບແຕ່ລະທ່ານ ເຊິ່ງເນື້ອໃນພົວພັນກັບຫຼາຍບັນຫາຢ່າງກວ້າງຂວາງ ແລະເລິກເຊິ່ງ.

ໃນກອງປະຊຸມໄດ້ຮັບຟັງບົດຮຽນໃນຫົວຂໍ້: ບົດບາດຂອງວິທະຍາກອນແລະຫຼັກການເວົ້າຂອງວິທະຍາກອນ ສະເໜີໂດຍທ່ານ ນາງ ບຸນເພັງ ມູນໂພໄຊ ອະດີດລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ການສ້າງຄວາມເຊື່ອໝັ້ນສຳລັບວິທະຍາກອນ ແລະ ນັກປາຖະກະຖາ ສະເໜີໂດຍທ່ານ ສີພຸກ ວົງພັກດີ ອະດີດຮອງລັດຖະມົນຕີກະຊວງພາຍໃນ,ຄວາມຮູ້ພື້ນຖານການເປັນວິທະຍາກອນຂອງສະພາແຫ່ງຊາດ ສະເໜີໂດຍທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາຄົ້ນຄວ້າ, ສົນທະນາແລກປ່ຽນຄຳຄິດຄຳເຫັນຢ່າງຈິງຈັງ ແລະ ກົງໄປກົງມາຕໍ່ເນື້ອໃນແຕ່ລະຫົວຂໍ້.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນງົບປະມານຊ່ວຍເຫຼືອລ້າຈາກມູນນິທິເອເຊຍ (TAF)ແລະງົບປະມານສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ສຸພາວັນ ທອມສະນິດ)**

# ຄະນະຜູ້ແທນສະພາແຫ່ງຊາດທັດສະນະສຶກສາຢູ່ນິວຊີແລນ



(ສພຊ) - ໃນລະຫວ່າງວັນທີ 05-09 ສິງຫາ 2024 ຄະນະຜູ້ແທນສະພາແຫ່ງຊາດແຫ່ງ ສປປ ລາວ ນຳໂດຍ ທ່ານ ປອ. ລີເບີ ລີບົວປາວ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການແຜນການ, ການເງິນ ແລະການກວດສອບ ພ້ອມດ້ວຍຄະນະ ຈຳນວນ 19 ທ່ານ ໄດ້ເດີນທາງໄປທັດສະນະສຶກສາວຽກງານລັດຖະສະພາຢູ່ປະເທດນິວຊີແລນ ເຊິ່ງໄດ້ແລກປ່ຽນບົດຮຽນກ່ຽວກັບຂັ້ນຕອນການບໍລິຫານດ້ານການຄົ້ນຄວ້ານິຕິກຳຂອງລັດຖະສະພານິວຊີແລນ, ຂັ້ນຕອນແລະວິທີການຈັດຕັ້ງປະຕິບັດຕໍ່ກັບບັນຫາສິ່ງທ້າທາຍຕ່າງໆ.

ການເຄື່ອນໄຫວທັດສະນະສຶກສາຄັ້ງນີ້ ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ເຂົ້າຢ້ຽມຂ່ຳນັບທ່ານ ເຈີຣີ ບຣາວລີ (Gerry Brownlee)ປະທານລັດຖະສະພາ; ພົບປະສອງຝ່າຍຮ່ວມກັບຄະນະຜູ້ແທນກະຊວງການຕ່າງປະເທດ ແລະ ການຄ້າຂອງປະເທດນິວຊີແລນ; ເຂົ້າຮ່ວມສັງເກດການ ແລະ ແລກປ່ຽນຖອດຖອນບົດຮຽນທີ່ດີຮ່ວມກັບພາກສ່ວນຕ່າງໆຂອງລັດຖະສະພານິວຊີແລນ ເປັນຕົ້ນ: ກຳມາທິການການເງິນແລະລາຍຈ່າຍ, ກຳມາທິການພັດທະນາເສດຖະກິດ, ວິທະຍາສາດ ແລະ ນະວັດຕະກຳ, ກຳມາທິການຮ້ອງຂໍຄວາມເປັນທຳ; ການບໍລິການຂໍ້ມູນ-ຂ່າວສານ, ການຄົ້ນຄວ້າ ແລະ ການບໍລິການວຽກງານຫໍສະໝຸດ.

ນອກນັ້ນ, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ເຂົ້າຮ່ວມກອງປະຊຸມສຳມະນາແລກປ່ຽນບົດຮຽນ ນຳສະເໜີໂດຍສາດສະດາຈານ ແລະ ຊ່ຽວຊານມະຫາວິທະຍາໄລວິກຕໍເຣຍແວວລິງຕັນ ກັບວຽກງານລັດຖະສະພາ ໂດຍສະເພາະຫົວຂໍ້ກ່ຽວກັບຂະບວນການລັດຖະສະພາ, ການແນະນຳລັດຖະສະພານິວຊີແລນ ແລະ ຂະບວນການສ້າງນະໂຍບາຍ, ພາລະບົດບາດຂອງກຸ່ມຄົນທີ່ໄດ້ຮັບຜົນປະໂຫຍດໃນຂະບວນການສ້າງນະໂຍບາຍຂອງນິວຊີແລນ, ຂະບວນການສ້າງນະໂຍບາຍໂດຍອີງຕາມຫຼັກຄວາມເປັນຈິງ, ຂະບວນການຕັດສິນໃຈໂດຍອີງໃສ່ຫຼັກຖານຢູ່ປະເທດນິວຊີແລນ ແລະ ບົດບາດຂອງທະນາຄານສຳຮອງ (NZ Reserve Bank)ຂະບວນການສ້າງນະໂຍບາຍ, ແຜນການປົກຄອງທີ່ດີໄລຍະສັ້ນ ແລະ ໄລຍະຍາວ ແລະ ຫົວຂໍ້ສຳຄັນອື່ນໆ. ຜ່ານການນຳສະເໜີ, ຮັບຟັງການເຜີຍແຜ່ຫົວຂໍ້ຕ່າງໆຂອງຊ່ຽວຊານ ແລະ ລົງເລິກແລກປ່ຽນປະສົບການ,ຖອດຖອນບົດຮຽນຕົວຈິງ ຮ່ວມກັບກຳມາທິການກ່ຽວຂ້ອງຂອງລັດຖະສະພານິວຊີແລນ ເຮັດໃຫ້ຄະນະຜູ້ແທນລາວໄດ້ຮຽນຮູ້ ແລະ ເຂົ້າໃຈຫຼາຍບັນຫາກ່ຽວຂ້ອງຈາກຜົນໄດ້ຮັບຂອງການສຳມະນາແລກປ່ຽນບົດຮຽນຄັ້ງນີ້ ກາຍເປັນຄວາມຮູ້, ບົດຮຽນທີ່ດີ ແລະ ມີຄຸນຄ່າຢ່າງຫຼວງຫຼາຍສຳລັບຄະນະຜູ້ແທນລາວ ເພື່ອ ນຳເອົາບົດຮຽນດັ່ງກ່າວໄປຜັນຂະຫຍາຍ ແລະ ປັບໃຊ້ເຂົ້າໃນໜ້າທີ່ວຽກງານຕົວຈິງໃຫ້ເກີດຜົນປະໂຫຍດສູງສຸດ.

# ປາຖະກະຖາ...

(ຕໍ່ຈາກໜ້າ 1)

ຮອງປະທານກຳມາທິການ,ຫົວໜ້າ-ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ ພ້ອມດ້ວຍຄະນະກົມ, ສູນ, ຫ້ອງການ, ພະແນກ ແລະ ພະນັກງານ-ລັດຖະກອນພາຍໃນ ສພຊ ແລະ ຜູ້ຕາງໜ້າຈາກບັນດາກະຊວງ-ອົງການທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ມີຄຳເຫັນກ່າວໄຂວ່າ: ໂດຍປົກກະຕິແລ້ວການຈັດພິທີປາຖະກະຖາ ແມ່ນຈະມີລັກສະນະເລົ່າຄືນມູນເຊື້ອ, ຂະບວນວິວັດໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ການເຕີບໃຫຍ່ຂະຫຍາຍຕົວຂອງບຸກຄົນ, ການຈັດຕັ້ງ ຫຼື ວັນສຳຄັນຕ່າງໆຂອງຊາດ. ແຕ່ສຳລັບພິທີໃນມື້ນີ້ ແມ່ນຈັດຂຶ້ນໃນຈຸດພິເສດທີ່ຕິດພັນກັບຂະບວນການປັບປຸງລັດຖະທຳມະນູນ ສະບັບປີ2015 ຂອງຄະນະກຳມະການລະດັບຊາດ; ສະນັ້ນ, ຈະດຳ ເນີນໃນລັກສະນະເປັນການແລກປ່ຽນຄວາມຄິດເຫັນກ່ຽວກັບການສ້າງ ແລະ ປັບປຸງລັດຖະທຳມະນູນໃນໄລຍະຜ່ານມາ ເວົ້າລວມ, ເວົ້າສະເພາະ ກໍເພື່ອເປັນການເກັບກຳຂໍ້ມູນທີ່ເປັນປະໂຫຍດໃນການກະກຽມປັບປຸງລັດຖະທຳມະນູນໃນຕໍ່ໜ້າ ໃຫ້ມີຄວາມສອດຄ່ອງ, ຮັດກຸມ, ແທດຕົວຈິງ. ດັ່ງນັ້ນ, ຈຶ່ງຂໍໃຫ້ບັນດາທ່ານຈົ່ງຕັ້ງໃຈຮັບຟັງ, ຄົ້ນຄວ້າ ແລະ ມີຄຳເຫັນຕໍ່ກັບບົດສະຫຼຸບການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 ເພື່ອເປັນຂໍ້ມູນປັບ ປຸງບົດສະຫຼຸບດັ່ງກ່າວ ໃຫ້ມີເນື້ອໃນຄົບຖ້ວນ, ສົມບູນ ກ່ອນຈະສະເໜີລາຍງານຂໍທິດຊີ້ນຳຈາກກອງປະຊຸມກົມການ ເມືອງ ຮ່ວມກັບຄະນະເລຂາທິການສູນກາງພັກ ໃນທ້າຍເດືອນສິງຫານີ້.

ໃນພິທີ, ທ່ານ ຄຳແພງ ວິລະພັນ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ ໄດ້ສະເໜີບົດສະຫຼຸບການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ2015 ແລະຮັບຟັງການປາຖະກະຖາວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 33 ປີ ຈາກທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໂດຍທ່ານໄດ້ເລົ່າຄືນເລີ່ມຕັ້ງ ແຕ່ມື້ລົງມືສ້າງ, ບຸກຄົນຢູ່ໃນຄະນະສ້າງ, ປັບປຸງ ແລະ ເຫດຜົນຂອງການປະກາດເປັນວັນລັດຖະທຳມະນູນແຫ່ງຊາດ ຈົນຮອດປັດຈຸບັນ.

**(ສອນສັກ ວັນວິໄຊ)**

# ແລກປ່ຽນບົດຮຽນວຽກງານຫ້ອງມູນເຊື້ອ




(ສພຊ) - ການພົບປະສອງຝ່າຍລະຫວ່າງທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າກົມສື່ມວນຊົນ, ສະພາແຫ່ງຊາດກັບທ່ານ ນາງ ແພງພັນ ບຸບຜາພອນ ຫົວໜ້າກົມໂຄສະນາ, ສູນກາງແນວລາວສ້າງຊາດ (ສນຊ) ພ້ອມດ້ວຍຄະນະພະແນກ ແລະ ວິຊາການຂອງສອງກົມ ໄດ້ຈັດຂຶ້ນໃນຕອນບ່າຍວັນສຸກທີ 16 ສິງຫາ 2024 ທີ່ ສນຊ; ຈຸດປະສົງແມ່ນເພື່ອແລກປ່ຽນບົດຮຽນວຽກງານຫ້ອງມູນເຊື້ອຂອງສູນກາງແນວລາວສ້າງຊາດເປັນຕົ້ນ: ການກະກຽມເນື້ອໃນ, ການຈັດວາງຮູບພາບໃຫ້ຖືກກັບຫຼັກການຂອງການວາງສະແດງ, ວິທີການນຳສະເໜີ, ການນຳທ່ຽວ, ການປະສານງານທັງພາຍໃນ-ພາຍນອກ, ການບໍລິຫານວຽກງານຮອບດ້ານໃຫ້ແກ່ຫ້ອງມູນເຊື້ອ.

ທ່ານ ປອ. ພົດສະໄໝ ບຸນວິໄລ ໄດ້ມີຄຳເຫັນວ່າ: ການພົບປະໃນຄັ້ງນີ້ ມີຄວາມໝາຍສຳຄັນຫຼາຍ ໂດຍໄດ້ມີໂອກາດແລກປ່ຽນບົດຮຽນເຊິ່ງກັນແລະກັນລະຫວ່າງສອງກົມ ເຊິ່ງກົມສື່ມວນຊົນຈະນຳເອົາບົດຮຽນດັ່ງກ່າວໄປໝູນໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງໃຫ້ມີຄວາມພ້ອມຮອບດ້ານ ແລະ ໃຫ້ຕິດພັນກັບປະຫວັດມູນເຊື້ອຂອງສະພາແຫ່ງຊາດໃນແຕ່ລະຊຸດ.

ຕອນທ້າຍ, ສອງຝ່າຍເຫັນດີເປັນເອກະພາບມອບໃຫ້ພະແນກທີ່ກ່ຽວຂ້ອງຂອງສອງກົມດັ່ງກ່າວ ເປັນເຈົ້າການສືບຕໍ່ພົວພັນປະສານງານກັນ ເພື່ອຈັດຕັ້ງປະຕິບັດວຽກງານຫ້ອງມູນເຊື້ອ ໃຫ້ບັນລຸໄດ້ຕາມຈຸດປະສົງ ແລະລະດັບຄາດໝາຍທີ່ວາງໄວ້.

# ປະທານ ກວທ ຕ້ອນຮັບການເຂົ້າພົບປະຂອງຄະນະຜູ້ບໍລິຫານເບຍລາວ



(ສພຊ) - ຕອນບ່າຍວັນທີ 14 ສິງຫາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ບຸນຕາ ເທບພະວົງ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ (ກວທສ) ພ້ອມດ້ວຍຄະນະ ໄດ້ຕ້ອນຮັບການເຂົ້າພົບປະຂອງຄະນະຜູ້ບໍລິຫານບໍລິສັດ ເບຍລາວ ຈຳກັດ ນຳໂດຍທ່ານ ເຮັນຣິກ ຈູລ ເອັນເດີຊັນ ຜູ້ອຳນວຍການໃຫຍ່ບໍລິສັດ ເບຍລາວ ຈຳກັດ.

ທ່ານ ເຮັນຣິກ ຈູລ ເອັນເດີຊັນ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ແລະສະແດງຄວາມຍິນດີຕໍ່ທ່ານ ບຸນຕາ ເທບພະວົງ ທີ່ໄດ້ຮັບການແຕ່ງຕັ້ງເປັນປະທານກຳມາທິການວັດທະນະທຳ-ສັງຄົມ ຜູ້ໃໝ່; ພ້ອມທັງລາຍງານສະພາບລວມການດຳເນີນທຸລະກິດໃນໄລຍະຜ່ານມາ, ຜົນສຳເລັດ ແລະ ນະໂຍບາຍໃນຕໍ່ໜ້າລວມທັງການຊ່ວຍເຫຼືອສັງຄົມຂອງບໍລິສັດເບຍລາວ ຈຳກັດ.

ທ່ານປະທານ ກວທສ ໄດ້ສະແດງຄວາມຂອບໃຈ ແລະ ຕີລາຄາສູງຕໍ່ຜົນງານທີ່ທາງບໍລິສັດສາມາດຍາດມາໄດ້ໃນໄລຍະຜ່ານມາ; ແຈ້ງໃຫ້ຊາບໂດຍຫຍໍ້ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX, ກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານ ຄັ້ງທີ 1 ປະຈຳປີ 2024 ພ້ອມທັງແຈ້ງໃຫ້ຊາບເຖິງທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງກຳມາທິການວັດທະນະທຳ-ສັງຄົມ ໂດຍສະເພາະການເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ ໃນການປະຕິບັດ 3 ພາລະບົດບາດ.

**(ພາບ: ສອນສັກ ວັນວິໄຊ;
ຂ່າວ: ນາງ ອາລິນ ສຸພົມມະປະກິດ)**

# ສພຊ ຮ່ວມກັບອົງການກາແດງ ສ້າງຂະບວນການ
## ບໍລິຈາກເລືອດສະເຫຼີມສະຫຼອງວັນລັດຖະທຳມະນູນ ຄົບຮອບ 33 ປີ



(ສພຊ) - ເພື່ອສ້າງຂະບວນການສະເຫຼີມສະຫຼອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 33 ປີ (15/8/1991-15/8/2024); ເຕົ້າໂຮມຄວາມສາມັກຄີແລະປຸກລະດົມສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດແລະປະຊາຊົນລາວບັນດາເຜົ່າ ໄດ້ຮັບຮູ້ຄວາມໝາຍຄວາມສຳຄັນຂອງວັນປະກາດໃຊ້ລັດຖະທຳມະນູນ ແຫ່ງ ສປປ ລາວ ທັງເປັນການປະກອບສ່ວນຊ່ວຍເຫຼືອປະຊາຊົນບັນດາເຜົ່າ ເວົ້າສະເພາະແມ່ນຊ່ວຍສະຖາບັນເລືອດແຫ່ງຊາດ ແລະ ສູນເລືອດຂັ້ນແຂວງໃນທົ່ວປະເທດມີເລືອດສະໜອງໃຫ້ແກ່ຄົນເຈັບແຕ່ລະວັນ ແລະ ສ້າງຄັງເລືອດແຮໄວ້ໃຫ້ປະຊາຊົນໃນຍາມຈຳເປັນ.

ເມື່ອວັນທີ 16 ສິງຫາ 2024 ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີຂະບວນການຮັບບໍລິຈາກເລືອດເພື່ອຊ່ວຍເຫຼືອສັງຄົມ "ໃຫ້ເລືອດ ໃຫ້ຊີວິດ" ໂດຍການເປັນປະທານກ່າວເປີດພິທີຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ; ມີທ່ານ ບຸນຕາ ເທບພະວົງ ກຳມະການສຳຮອງສູນກາງພັກ, ປະທານກຳມາທິການວັດທະນະທຳ-ສັງຄົມ, ທ່ານດຣ. ຈັນທະລາ ສຸກສາຄອນ ຫົວໜ້າສະຖາບັນເລືອດແຫ່ງຊາດ, ອົງການກາແດງແຫ່ງຊາດລາວ ພ້ອມດ້ວຍພະນັກງານພາຍໃນ ສພຊ, ຈາກບັນດາກະຊວງ-ອົງການອ້ອມຂ້າງສູນກາງແລະມວນຊົນຊາວນະຄອນຫຼວງ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ມີຄຳເຫັນຕໍ່ພິທີວ່າ: ຄະນະເລຂາທິການສະພາແຫ່ງຊາດ ສົມທົບກັບສະຖາບັນເລືອດແຫ່ງຊາດ, ອົງການກາແດງແຫ່ງຊາດລາວ ໄດ້ພ້ອມກັນເຊີນຊວນພະນັກງານ-ລັດຖະກອນທັງພາກລັດ ແລະ ເອກະຊົນ, ທະຫານ-ຕຳຫຼວດ, ພໍ່ແມ່ປະຊາຊົນບັນດາເຜົ່າ ໃນທົ່ວນະຄອນຫຼວງວຽງຈັນ ຮ່ວມບໍລິຈາກເລືອດເພື່ອຊ່ວຍເຫຼືອສັງຄົມເພື່ອເຮັດໃຫ້ສະຖາບັນເລືອດແຫ່ງຊາດ ແລະ ສູນເລືອດບັນດາແຂວງ ໃນຂອບເຂດທົ່ວປະເທດ ມີເລືອດຕອບສະໜອງ "ໃຫ້ເລືອດ ໃຫ້ຊີວິດ" ແກ່ຄົນເຈັບທີ່ຕ້ອງການເລືອດໃນແຕ່ລະວັນ ໂດຍສະເພາະໃນໄລຍະໄຂ້ເລືອດອອກລະບາດແລະສ້າງຄັງເລືອດແຮໄວ້ເພື່ອປະຊາຊົນ; ນອກຈາກການບໍລິຈາກເລືອດແລ້ວ, ຍັງເປັນການເຕົ້າໂຮມຄວາມສາມັກຄີລະຫວ່າງສະພາແຫ່ງຊາດກັບບັນດາກະຊວງ-ອົງການຕ່າງໆ ແລະ ພໍ່ແມ່ປະຊາຊົນທຸກຊັ້ນຄົນ ເພື່ອພ້ອມກັນສ້າງຂະບວນການສະເຫຼີມສະຫຼອງວັນປະກາດໃຊ້ລັດຖະທຳມະນູນ ແຫ່ງ ສປປ ລາວ ໃຫ້ມີບັນຍາກາດເບີກບານມ່ວນຊື່ນ.

ພາຍໃນງານຍັງມີກິດຈະກຳຖາມ-ຕອບຄວາມຮູ້ທົ່ວໄປ, ຮ້ອງເພງ ແລະ ກິດຈະກຳອື່ນໆ.

**(ສອນສັກ ວັນວິໄຊ)**

# ເຝິກອົບຮົມວຽກງານເນື້ອໃນ ແລະ ການກະກຽມຮອບດ້ານໃຫ້ແກ່ກອງປະຊຸມ

(ສພຊ) - ເພື່ອຍົກສູງຄຸນນະພາບໃນການເປັນເສນາທິການທາງດ້ານເນື້ອໃນ ແລະ ຮັບປະກັນຄວາມພ້ອມໃນການກະກຽມ ແລະ ຮັບໃຊ້ກອງປະຊຸມສະໄໝສາມັນຂອງສະພາປະຊາຊົນຂັ້ນແຂວງ (ສພຂ) ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ; ຍົກສູງຂີດຄວາມສາມາດທາງດ້ານເນື້ອໃນ ໂດຍສະເພາະບັນດາເອກະສານທີ່ຕິດພັນກັບກອງປະຊຸມ ສພຂ ໃຫ້ມີຄຸນນະພາບ ທັງເປັນການຖ່າຍທອດແລະແລກປ່ຽນບົດຮຽນທາງດ້ານທິດສະດີ, ພຶດຕິກຳຕົວຈິງ, ການສ້າງຄວາມເຂັ້ມແຂງທາງດ້ານການຂຶດຂຽນເອກະສານປື້ນອ້ອມ ໃຫ້ແກ່ກອງປະຊຸມສະໄໝສາມັນຂອງສະພາປະຊາຊົນຂັ້ນແຂວງເປັນຕົ້ນບົດສັງລວມຄວາມເຫັນ, ຮ່າງຄຳຖາມເຈາະຈີ້ມ, ບົດສະຫຼຸບ, ການເປັນເລຂານຸການກອງປະຊຸມຮອບດ້ານ ແລະ ເອກະສານອື່ນໆ.

ໃນລະຫວ່າງວັນທີ 16-18 ສິງຫາ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ ຄະນະເລຂາທິການສະພາແຫ່ງຊາດ (ຄລສ) ໄດ້ຈັດກອງປະຊຸມເຝິກອົບຮົມວຽກງານເນື້ອໃນແລະຂັ້ນຕອນການກະກຽມຮອບດ້ານໃຫ້ແກ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານສິງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານເລຂາທິການ, ຮອງເລຂາທິການ ຜູ້ຊີ້ນຳຂະແໜງຄົ້ນຄວ້າ-ສັງລວມ ແລະ ພະນັກງານຂະແໜງຄົ້ນຄວ້າ-ສັງລວມ ຂອງ ສພຂ 6 ແຂວງຄື: ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະ ພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງຂອງ ຄລສ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີບົດຮຽນຕົ້ນຕໍຄື: ການຮ່າງບົດໂອ້ລົມໃຫ້ການນຳ ແລະ ບົດສັງລວມຄຳເຫັນໃຫ້ປະທານກອງປະຊຸມ, ການສ້າງຄຳຖາມເຈາະຈີ້ມ ແລະ ບົດປະກອບຄຳເຫັນຕໍ່ກອງປະຊຸມ, ຂັ້ນຕອນການກະກຽມວຽກງານຮອບດ້ານໃຫ້ແກ່ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ; ຈາກນັ້ນ, ກໍໄດ້ສົນທະນາແລກປ່ຽນຄຳເຫັນເຊິ່ງກັນແລະກັນ ແລະ ແບ່ງກຸ່ມເພື່ອເຝິກຫັດຕົວຈິງແຕ່ລະເນື້ອໃນ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມວ່າ: ການຈັດເຝິກອົບຮົມຄັ້ງນີ້ເປັນການສ້າງເງື່ອນໄຂໃຫ້ແກ່ບັນດາສຳມະນາກອນໄດ້ມີໂອກາດແລກປ່ຽນຄຳຄິດຄຳເຫັນກັບວິທະຍາກອນ ໂດຍມີການສົມທຽບບົດຮຽນ ແລະ ການປະຕິບັດວຽກງານຕົວຈິງລະຫວ່າງສູນກາງ-ທ້ອງຖິ່ນຢ່າງກົງໄປກົງມາ ໃນຖານະເປັນເສນາທິການດ້ານເນື້ອໃນໃຫ້ແກ່ການກະກຽມກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ ເພື່ອນຳເອົາບົດຮຽນດັ່ງກ່າວໄປໝູນໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງໃຫ້ສອດຄ່ອງກັບສະພາບຈຸດພິເສດຂອງແຕ່ລະພາກສ່ວນ ໃຫ້ນັບມື້ດີຂຶ້ນ ແລະ ມີປະສິດທິພາບ. ເພື່ອຮັບປະກັນເຮັດໃຫ້ວຽກງານທີ່ກ່າວມາຂ້າງເທິງນັ້ນ ໄດ້ຮັບການຈັດຕັ້ງປະຕິບັດນັບມື້ດີຂຶ້ນເທື່ອລະກ້າວ ແລະ ຫັນໄປສູ່ຄຸນນະພາບສູງກວ່າເກົ່າ, ທ່ານຍັງໄດ້ມີບາງຄຳຄິດຄຳເຫັນດັ່ງນີ້: 1) ການເປັນເສນາທິການດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງນັ້ນ ແມ່ນມີຄວາມສຳຄັນຫຼາຍ ໂດຍສະເພາະຜູ້ທີ່ຮັບຜິດຊອບວຽກງານຂົງເຂດຄົ້ນຄວ້າ-ສັງລວມ ຕ້ອງໄດ້ເອົາໃຈໃສ່ຄົ້ນຄວ້າແນວທາງນະໂຍບາຍ, ກົດໝາຍ, ນິຕິກຳຕ່າງໆທີ່ກ່ຽວຂ້ອງ ລວມທັງການກຳນົດ ແລະ ຈັດຕັ້ງຜັນຂະຫຍາຍບັນດາແຜນການ-ແຜນງານ, ໂຄງການຕ່າງໆ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດບັນລຸຜົນສຳເລັດຕາມທີ່ວາງໄວ້; ນອກນັ້ນ, ກໍຕ້ອງໄດ້ເອົາໃຈໃສ່ກະກຽມຮອບດ້ານແຕ່ຫົວທີ. 2) ບົດຮຽນການສ້າງບົດປະກອບຄຳເຫັນຕໍ່ເນື້ອໃນຕ່າງໆ ເຊິ່ງຕ້ອງເອົາໃຈໃສ່ເກັບກຳຂໍ້ມູນ, ນຳເອົາຄວາມຄິດຄວາມເຫັນ, ຄວາມມຸ່ງມາດປາຖະໜາຂອງຜູ້ມີສິດເລືອກຕັ້ງທົ່ວປະເທດມາສະເໜີແຈ້ງໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງໄດ້ຮັບຮູ້ ແລະ ເປັນຂໍ້ມູນໃນການແກ້ໄຂບັນຫາຕ່າງໆ ໃຫ້ໄດ້ຮັບການປັບປຸງດີຂຶ້ນ; ພ້ອມດຽວກັນນັ້ນ, ບົດປະກອບຄຳເຫັນ ຕ້ອງສ່ອງແສງໃຫ້ເຫັນຄວາມເປັນເອກະພາບຕໍ່ບັນດາເນື້ອໃນທີ່ນຳມາພິຈາລະນາຮັບຮອງຢູ່ກອງປະຊຸມ. ສຳລັບການສ້າງຄຳຖາມເຈາະຈີ້ມນັ້ນ ກໍເພື່ອເປັນບ່ອນອີງໃຫ້ຜູ້ແທນກອງປະຊຸມ ມີການຄົ້ນຄວ້າ-ສັງລວມບັນດາຂໍ້ມູນທີ່ກ່ຽວຂ້ອງກັບບັນຫາທີ່ເຈາະຈີ້ມຢ່າງຖືກຈຸດ, ປະຢັດເວລາ ແລະ ເປັນບ່ອນອີງໃນການປະກອບຄຳເຫັນຕໍ່ເນື້ອໃນຕ່າງໆ; ຊ່ວຍເຮັດໃຫ້ມີຄວາມສະດວກໃນການເກັບກຳຂໍ້ມູນ ເພື່ອນຳໄປຄົ້ນຄວ້າປັບປຸງໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ມີຄວາມສະດວກໃນການສະຫຼຸບສັງລວມການປະກອບຄຳເຫັນຂອງຜູ້ແທນ. 3) ບົດຮຽນການສ້າງບົດສັງລວມຄຳເຫັນໃຫ້ປະທານກອງປະຊຸມ ແມ່ນມີຄວາມສຳຄັນຫຼາຍ ໂດຍສະເພາະການພິຈາລະນາເນື້ອໃນຂອງກອງປະຊຸມ ເຊິ່ງການສັງລວມຄວາມເຫັນຕ້ອງສ່ອງແສງໃຫ້ເຫັນການຕີລາຄາປະກອບຄຳເຫັນຂອງຜູ້ແທນ ວ່າເຫັນດີຮັບຮອງເອົາເນື້ອໃນທີ່ນຳມາພິຈາລະນາ ຫຼື ບໍ່, ບັນຫາໃດຜູ້ແທນມີທັດສະນະຢາກສະເໜີໃຫ້ມີການປັບປຸງ. 4) ການຮ່າງບົດໂອ້ລົມແມ່ນມີຄວາມສຳຄັນ ເປັນແນວຄິດຊີ້ນຳ, ໜຶ່ງໃນແບບແຜນວິທີນຳພາຂອງຂັ້ນເທິງເພື່ອເນັ້ນໜັກການຈັດຕັ້ງໜ້າທີ່ການເມືອງ ຫຼື ຄວາມຮັບຜິດຊອບວຽກງານໃດໜຶ່ງຂອງຂັ້ນລຸ່ມ ໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ, ມະຕິຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ທີ່ໄດ້ວາງໄວ້.



ກອງປະຊຸມຄັ້ງນີ້ນຳໃຊ້ງົບປະມານສົມທົບຂອງມູນນິທິເອເຊຍ (The Asia Foundation-TAF) ແລະ ຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ກຸກກິກ ບຸດດາໄຊ)**

# ຍົກສູງວຽກງານສ້າງ ແລະ ປັບປຸງ ກົດໝາຍ ໃຫ້ພະນັກງານສະພາ



(ສພຊ) - ກຳມາທິການກົດໝາຍ ໄດ້ຈັດກອງປະຊຸມຍົກສູງວຽກງານສ້າງ ແລະ ປັບປຸງກົດໝາຍ ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ; ມີຮອງປະທານ, ຄະນະກົມ, ຄະນະພະແນກແລະວິຊາການຂອງກຳມາທິການດັ່ງກ່າວ, ບັນດາປະທານ-ຮອງປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງຄວາມສະຫງົບ ສະພາປະຊາຊົນຂັ້ນແຂວງ ໃນຂອບເຂດທົ່ວປະເທດ ພ້ອມດ້ວຍວິຊາການ ແລະ ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີເປີດ, ທ່ານ ຄຳແພງ ວິລະພັນ ໃຫ້ຮູ້ວ່າ: ກອງປະຊຸມຄັ້ງນີ້ ເປັນກອງປະຊຸມວິຊາການກ່ຽວກັບວຽກງານສ້າງແລະປັບປຸງກົດໝາຍ ແນໃສ່ຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານ-ລັດຖະກອນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຈຳນວນໜຶ່ງໄດ້ຮັບຮູ້ ແລະ ເຂົ້າໃຈວຽກງານສ້າງ ແລະ ປັບປຸງກົດໝາຍ ທັງເປັນການແລກປ່ຽນບົດຮຽນເຊິ່ງກັນແລະກັນ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນໄລຍະຜ່ານມາ ເພື່ອຊອກໃຫ້ເຫັນດ້ານດີ, ດ້ານອ່ອນຂໍ້ຄົງຄ້າງຂອງການເປັນເສນາທິການໃນການສ້າງນິຕິກຳຂັ້ນແຂວງ, ການເປັນເສນາທິການວຽກງານປິ່ນອ້ອມ ໃຫ້ແກ່ຄະນະນຳຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ຮັບການປັບປຸງແກ້ໄຂໃຫ້ດີຂຶ້ນ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການບັນລະຍາຍ ແລະ ສົນທະນາແລກປ່ຽນຄຳເຫັນຕໍ່ເນື້ອໃນຕ່າງໆຄື: ພາລະບົດບາດການເປັນເສນາທິການໃນການກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍ; ການກະກຽມ ແລະ ນຳສົ່ງຮ່າງກົດໝາຍໃຫ້ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ນຳທາບທາມຄຳເຫັນນຳສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງແລະພາກສ່ວນກ່ຽວຂ້ອງໃນທົ່ວປະເທດ; ການບັນທຶກແລະການກະກຽມບົດລາຍງານຜົນສຳເລັດຂອງກອງປະຊຸມຕໍ່ຮ່າງກົດໝາຍ; ບັນດາທ່ານປະທານ-ຮອງປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບກໍໄດ້ຜັດປ່ຽນກັນສະເໜີບົດຮຽນການເປັນເສນາທິການໃນວຽກງານສ້າງນິຕິກຳຂັ້ນແຂວງແລະການຈັດຕັ້ງທາບທາມຮ່າງກົດໝາຍຂອງສະພາປະຊາຊົນຂັ້ນແຂວງ ພ້ອມທັງສົນທະນາແລກປ່ຽນ ແລະ ລະດົມຄຳຄິດຄຳເຫັນຕໍ່ໜ້າວຽກຕ່າງໆ ເພື່ອຊອກໃຫ້ເຫັນວິທີການແລະມາດຕະການແກ້ໄຂຕໍ່ດ້ານອ່ອນທີ່ໄດ້ຈັດຕັ້ງປະຕິບັດໄລຍະຜ່ານມາ. ພ້ອມນັ້ນ, ຍັງໄດ້ຮັບຟັງການສະເໜີກ່ຽວກັບຂະບວນການສ້າງ ແລະ ປັບປຸງກົດໝາຍຂອງປະເທດການາດາ ໂດຍຊ່ຽວຊານຈາກຕ່າງປະເທດແລະຄົ້ນຄວ້າແລກປ່ຽນບົດຮຽນກັບຊ່ຽວຊານ ເຊິ່ງເປັນພື້ນຖານສຳຄັນໃນການຄົ້ນຄວ້າ, ພິຈາລະນາ ແລະ ນຳໄປໝູນໃຊ້ເຂົ້າໃນໜ້າທີ່ວຽກງານຕົວຈິງ.

ກອງປະຊຸມຄັ້ງນີ້ ຈັດຂຶ້ນໃນວັນທີ 15-17 ສິງຫາ 2024 ຢູ່ເມືອງແກ້ວອຸດົມ ແຂວງວຽງຈັນ ໂດຍນຳໃຊ້ງົບປະມານສົມທົບຂອງມູນນິທິເອເຊຍ(TAF) ແລະ ຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ປາກາລັກ ຜິມມີໄຊ)**

# ສຳເລັດສຳມະນາການມີສ່ວນຮ່ວມຂອງແມ່ຍິງຕໍ່ວຽກງານ
## ການປົກຄອງທ້ອງຖິ່ນ ແລະ ພັດທະນາຊົນນະບົດແກ້ໄຂຄວາມທຸກຍາກ

(ສພຊ) - ກອງປະຊຸມສຳມະນາການມີສ່ວນຮ່ວມຂອງແມ່ຍິງຕໍ່ວຽກງານການປົກຄອງທ້ອງຖິ່ນ ແລະ ວຽກງານພັດທະນາຊົນນະບົດແກ້ໄຂຄວາມທຸກຍາກ ໄດ້ຈັດຂຶ້ນໃນວັນທີ 12-13 ສິງຫາ 2024 ທີ່ນະຄອນຫຼວງພະບາງ ແຂວງຫຼວງພະບາງ ໂດຍການເປັນປະທານຂອງທ່ານ ຄຳຈັນ ໂສຕາປະເສີດ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການບັນດາເຜົ່າ (ກບຜ); ມີຮອງປະທານກຳມາທິການບັນດາເຜົ່າ, ບັນດາປະທານ ແລະ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງ ກບຜ ປະຈຳເຂດເລືອກຕັ້ງທີ 1-10, ຜູ້ຕາງໜ້າຈາກບັນດາກົມທີ່ກ່ຽວຂ້ອງຂອງກະຊວງພາຍໃນ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງປ້ອງກັນປະເທດ, ກະຊວງແຜນການ ແລະ ການລົງທຶນ, ສູນກາງສະຫະພັນແມ່ຍິງລາວ ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະ ວິຊາການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ແລະ ເຂດເລືອກຕັ້ງຕ່າງໆ ເຂົ້າຮ່ວມຫຼາຍກວ່າ 70 ທ່ານ.

ໃນການກ່າວເປີດກອງປະຊຸມຢ່າງເປັນທາງການ, ທ່ານ ຄຳຈັນ ໂສຕາປະເສີດ ໃຫ້ຮູ້ວ່າ: ກອງປະຊຸມສຳມະນາຄັ້ງນີ້ ຈຸດປະສົງແມ່ນເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ບົດບາດທີ່ສຳຄັນຂອງແມ່ຍິງ ທີ່ໄດ້ຮັບການພັດທະນາຈາກແນວທາງຄວາມສະເໝີພາບຍິງ-ຊາຍຂອງພັກ-ລັດ. ໃນໄລຍະບໍ່ພໍເທົ່າໃດປີພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ ຈະເຫັນໄດ້ການພັດທະນາຕົນເອງຂອງເອື້ອຍນ້ອງແມ່ຍິງໃນຖັນແຖວຂອງອົງການບໍລິຫານລັດ, ການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ເວົ້າລວມ, ເວົ້າສະເພາະໃນຂົງເຂດວຽກງານການປົກຄອງທ້ອງຖິ່ນ ກໍຄືສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອຍົກລະດັບ




ການປົກຄອງທ້ອງຖິ່ນ; ບົດບາດຂອງແມ່ຍິງລາວບັນດາເຜົ່າຕໍ່ວຽກງານພັດທະນາຊົນນະບົດ ແລະ ການແກ້ໄຂ

ຄວາມຮັບຮູ້, ຄວາມເຂົ້າໃຈເປັນເອກະພາບຕໍ່ບັນດານິຕິກຳທີ່ກ່ຽວຂ້ອງກັບວຽກງານການປົກຄອງທ້ອງຖິ່ນ; ພ້ອມພຽງຮຽງໜ້າກັບເພດຊາຍ ເປັນກຳລັງແຮງ, ຊຸກຍູ້, ຍົກສູງພາລະບົດບາດຂອງແມ່ຍິງລາວບັນດາເຜົ່າ ປະກອບສ່ວນເຂົ້າໃນວຽກງານການປົກຄອງທ້ອງຖິ່ນ, ວຽກງານພັດທະນາຊົນນະບົດແກ້ໄຂຄວາມທຸກຍາກ, ເສີມຂະຫຍາຍຄວາມສາມາດການປະຕິບັດໜ້າທີ່ເຂົ້າໃນວຽກງານການ ເມື່ອຂອງຕົນສູງຂຶ້ນ. ທ່ານປະທານກອງປະຊຸມຍັງຮຽກຮ້ອງບັນດາທ່ານທີ່ເຂົ້າຮ່ວມ ຈົ່ງຍົກສູງຄວາມຮັບຜິດຊອບໃນການແບ່ງ ປັນຄວາມຮູ້ປະສົບການຂອງຕົນ ເພື່ອເພີ່ມຄວາມຮັບຮູ້ທີ່ເລິກເຊິ່ງ ແລະ ເປັນເອກະພາບກັນວ່າແມ່ຍິງມີບົດບາດທີ່ສຳຄັນຫຼາຍຕໍ່ວຽກງານການປົກຄອງທ້ອງຖິ່ນ, ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ກໍຄືວຽກງານອື່ນໆຂອງພັກ-ລັດ ທັງສູນກາງ ແລະ ທ້ອງຖິ່ນ.

ຜູ້ເຂົ້າຮ່ວມໄດ້ຮັບຟັງ ແລະ ຄົ້ນຄວ້າ, ແລກປ່ຽນບົດຮຽນ ແລະ ຄຳຄິດເຫັນ ຕໍ່ບັນດາຫົວຂໍ້ທີ່ວິທະຍາກອນໄດ້ສະເໜີໃນກອງປະຊຸມຄື: ບົດບາດຂອງແມ່ຍິງຕໍ່ວຽກງານສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ພາລະບົດບາດ, ໜ້າທີ່, ສິດຂອງກົມການປົກຄອງທ້ອງຖິ່ນ (ກະຊວງພາຍໃນ) ແລະ ການຈັດຕັ້ງປະຕິບັດວຽກງານການປົກຄອງທ້ອງຖິ່ນໃນໄລຍະຜ່ານມາ; ບົດບາດຂອງແມ່ຍິງລາວບັນດາເຜົ່າໃນການມີສ່ວນຮ່ວມຕໍ່ວຽກງານ

ຄວາມທຸກຍາກ; ການເຂົ້າເຖິງແຫຼ່ງທຶນທະນາຄານນະໂຍບາຍຂອງແມ່ຍິງລາວບັນດາເຜົ່າໃນໄລຍະຜ່ານມາ; ບົດບາດຂອງແມ່ຍິງໃນຂົງເຂດປ້ອງກັນຊາດ ຕໍ່ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.

ກອງປະຊຸມຄັ້ງນີ້ ເຮັດໃຫ້ຜູ້ເຂົ້າຮ່ວມໄດ້ເຂົ້າໃຈເຖິງບົດບາດຄວາມສຳຄັນຂອງພະນັກງານຂັ້ນສູງ ແລະ ເສນາທິການ ກໍຄືພະນັກງານເພດຍິງແຕ່ລະອົງການ ຕໍ່ຫຼາຍຂົງເຂດວຽກງານລະອຽດຈະແຈ້ງຂຶ້ນ; ນອກນັ້ນ, ຍັງໄດ້ເພີ່ມຄວາມຮັບຮູ້ ແລະ ເຂົ້າໃຈບັນດານິຕິກຳ, ແນວທາງນະໂຍບາຍທາງດ້ານທິດສະດີ ແລະ ພຶດຕິກຳຕົວຈິງໃນການຈັດຕັ້ງປະຕິບັດວຽກງານດ້ານດີ, ດ້ານອ່ອນແລະຂໍ້ຄົງຄາງ ເຊິ່ງຈະເປັນບົດຮຽນທີ່ດີໃນຕໍ່ໜ້າໃນການຍົກສູງບົດບາດການຕິດຕາມກວດກາຂອງສະພາແຫ່ງຊາດ ກໍຄືກຳມາທິການບັນດາເຜົ່າຕໍ່ກັບວຽກງານການມີສ່ວນຮ່ວມຂອງແມ່ຍິງຕໍ່ວຽກງານປົກຄອງທ້ອງຖິ່ນ ແລະວຽກງານພັດທະນາຊົນນະບົດແກ້ໄຂຄວາມທຸກຍາກ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ປາກາລັກ ຜິມມີໄຊ)**

# ຄະນະຜູ້ແທນລາວ ເຂົ້າຮ່ວມກອງປະຊຸມ ສົ່ງເສີມບົດບາດຍິງ-ຊາຍ ເພື່ອເສດຖະກິດສີຂຽວ




(ສພຊ)-ທ່ານ ປອ. ນາງ ວາລີ ເວດສະພົງ ສະມາຊິກສະພາແຫ່ງຊາດ, ຮອງປະທານສະພາອຸດສາຫະກຳ ແລະ ການຄ້າແຫ່ງຊາດ ໄດ້ເຂົ້າຮ່ວມກອງປະຊຸມສະມາຊິກລັດຖະສະພາພາກພື້ນກ່ຽວກັບການສົ່ງເສີມບົດບາດຍິງ-ຊາຍເພື່ອເສດຖະກິດສີຂຽວ (Regional Parliamentarians' Meeting on Gender Empowerment for a Green Economy) ທີ່ຈັດຂຶ້ນໃນວັນທີ 12-13 ສິງຫາ 2024 ຢູ່ນະຄອນຫຼວງອິດສະລາມາບັດ, ສາທາລະນະລັດ ອິດສະລາມ ປາກິດສະຖານ; ກອງປະຊຸມໄດ້ຈັດຂຶ້ນໂດຍການຮ່ວມມືຂອງອົງການປະຊາກອນ ແລະ ການພັດທະນາ (AFPPD) ແລະ ສະມາຄົມປະຊາກອນ ແລະ ການພັດທະນາອາຊີ (APDA) ໂດຍໄດ້ຮັບການສະໜັບສະໜູນຈາກອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ (UNFPA) ຜ່ານກອງທຶນຄວາມໄວ້ວາງໃຈຍີ່ປຸ່ນ (JTF) ເຊິ່ງມີຜູ້ເຂົ້າຮ່ວມ 300 ກວ່າຄົນທີ່ມາຈາກລັດຖະສະພາ, ລັດຖະບານ, ອົງການຈັດຕັ້ງສາກົນ, ອົງການ NGO, ອົງການຊາວໜຸ່ມ ແລະ ນັກວິຊາການຈາກ 20 ປະເທດ ເພື່ອແລກປ່ຽນ ແລະປຶກສາຫາລືກ່ຽວກັບການປະຕິບັດທີ່ດີກ່ຽວກັບນະໂຍບາຍ, ນິຕິກຳ ແລະ ໂຄງການປະຕິບັດງານຂອງກອງປະຊຸມສາກົນກ່ຽວກັບປະຊາກອນ ແລະ ການພັດທະນາ (ICPD) ແນໃສ່ແກ້ໄຂຄວາມສະເໝີພາບຍິງ-ຊາຍ, ການສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການປ່ຽນແປງດິນຟ້າອາກາດ ເຊິ່ງໄດ້ສຸມໃສ່ນະໂຍບາຍ, ລະບົບແລະການບໍລິການທີ່ສາມາດສ້າງຄວາມເຂັ້ມແຂງການລົງທຶນໃສ່ໄວໜຸ່ມ ແລະ ລຶບລ້າງຄວາມບໍ່ສະເໝີພາບຍິງ-ຊາຍ.

ທ່ານ ປອ. ນາງ ວາລີ ເວດສະພົງ ໄດ້ຮັບກຽດເຊີນຂຶ້ນເປັນປະທານກອງປະຊຸມໃນວາລະ "ບົດບາດຂອງຜູ້ກຳນົດນະໂຍບາຍໃນການເສີມຂະຫຍາຍບົດບາດຂອງແມ່ຍິງ ເພື່ອຮັບມືກັບການປ່ຽນແປງຂອງດິນຟ້າອາກາດ-ການປ່ຽນແປງຂອງດິນຟ້າອາກາດ ທີ່ຕິດພັນກັບຄວາມສ່ຽງແລະຄວາມບໍ່ແນ່ນອນຂອງແມ່ຍິງ ແລະ ເດັກຍິງໄວໜຸ່ມ"; ພິເສດ, ກອງປະຊຸມຄັ້ງນີ້ ໄດ້ຄົ້ນຄວ້າປຶກສາຫາລື ແລະ ເປັນເອກະພາບຮັບຮອງເອົາຖະແຫຼງການອິດສະລາມາບັດ. ພ້ອມກັນນີ້, ຄະນະຜູ້ແທນກອງປະຊຸມ ໄດ້ເດີນທາງໄປຢ້ຽມຢາມສູນຄວບຄຸມຂອງອົງການຄຸ້ມຄອງໄພພິບັດແຫ່ງຊາດ ແລະ ສະພານິຕິບັນຍັດຂອງປາກິດສະຖານ, ຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມຂອງສະພານິຕິບັນຍັດ ແລະ ຫ້ອງປະຊຸມສະພາແຫ່ງຊາດ.

**(ນາງ ສຸວັນໄຊ ເກິ່ງດາລາ)**

# ປະທານກຳມາທິການກົດໝາຍ ຕ້ອນຮັບທູດອິດສະຕຣາລີ ປະຈຳ ສປປລາວ



(ສພຊ) - ຕອນບ່າຍວັນທີ 13 ສິງຫານີ້ ທີ່ສະພາແຫ່ງຊາດ, ທ່ານ ຄຳແພງ ວິລະພັນ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ນາງ ເມແກນ ໂຈນສ໌ (Megan Jones) ເອກອັກຄະລັດຖະທູດ ແຫ່ງ ອິດສະຕຣາລີ ປະຈຳ ສປປ ລາວ.

ທ່ານ ຄຳແພງ ວິລະພັນ ໄດ້ສະແດງຄວາມຍິນດີຕ້ອນຮັບທ່ານ ນາງ ເມແກນ ໂຈນສ໌ ເຊິ່ງເປັນໂອກາດດີເພື່ອປຶກສາຫາລືບັນຫາຕ່າງໆທີ່ມີຄວາມສົນໃຈນຳກັນ ໂດຍສະເພາະໃນຂົງເຂດນິຕິບັນຍັດ ທັງເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສປປ ລາວ ກັບ ອິດສະຕຣາລີ ກໍຄືລະຫວ່າງສອງອົງການນິຕິບັນຍັດ ໃຫ້ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວຍິ່ງໆຂຶ້ນ ພ້ອມທັງສະແດງຄວາມຊົມເຊີຍທີ່ໄດ້ຮັບການແຕ່ງຕັ້ງເປັນເອກອັກຄະລັດຖະທູດອິດສະຕຣາລີຄົນໃໝ່ປະຈຳ ສປປ ລາວ. ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງປະເທດລາວ-ອິດສະຕຣາລີຕະຫຼອດໄລຍະ 69 ປີທີ່ຜ່ານມາ ເຊິ່ງໄດ້ຮັບການພັດທະນາ ແລະ ເສີມຂະຫຍາຍເປັນກ້າວໆ; ພິເສດ, ມີພະນັກງານຂອງສະພາແຫ່ງຊາດລາວຈຳນວນຫຼາຍທ່ານທີ່ສຳເລັດການສຶກສາຢູ່ປະເທດອິດສະຕຣາລີ.

ສະພາແຫ່ງຊາດລາວ ແລະ ລັດຖະສະພາອິດສະຕຣາລີ ໄດ້ມີການພົວພັນຮ່ວມມືນຳກັນເປັນຢ່າງດີ ແລະ ຕໍ່ເນື່ອງໃນຫຼາຍລະດັບ ເຊິ່ງເປັນການປະກອບສ່ວນເຂົ້າໃນການເສີມສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ມີມາແຕ່ດົນນານລະຫວ່າງສອງປະເທດ ທັງປະກອບສ່ວນສົ່ງເສີມສ້າງສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືເພື່ອການພັດທະນາຢູ່ໃນພາກພື້ນ ແລະ ໃນໂລກ. ສອງຝ່າຍໄດ້ແລກປ່ຽນການຢ້ຽມຢາມເຊິ່ງກັນແລະກັນຢ່າງປົກກະຕິ ແລະ ມີຫຼາຍລະດັບເຊິ່ງມີທັງຄະນະຜູ້ແທນຂັ້ນສູງນຳໂດຍປະທານສະພາແຫ່ງຊາດ, ກຳມາທິການ ແລະ ອື່ນໆ; ນອກນີ້, ກໍມີການຮ່ວມມືສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ທ່ານ ຄຳແພງ ວິລະພັນ ຍັງໄດ້ແຈ້ງໃຫ້ຊາບກ່ຽວກັບສະພາແຫ່ງຊາດລາວ ຊຸດທີ IX ແລະ ການປະຕິບັດໜ້າທີ່ຂອງກຳມາທິການກົດໝາຍ ໂດຍສັງເຂບ ແລະໃນເດືອນຕຸລານີ້ສະພາແຫ່ງຊາດລາວ ຈະເປັນເຈົ້າພາບຈັດກອງປະຊຸມໃຫຍ່ໄອປາ ຄັ້ງທີ45, ຫວັງວ່າຈະໄດ້ຮັບການສະໜັບສະໜູນຈາກອິດສະຕຣາລີ ໃນການປະຕິບັດພັນທະດັ່ງກ່າວໃຫ້ມີຜົນສຳເລັດ.

ທ່ານ ນາງ ເມແກນ ໂຈນສ໌ ກໍໄດ້ກ່າວສະແດງຄວາມຂອບໃຈການຕ້ອນຮັບຢ່າງອົບອຸ່ນ ແລະ ສະແດງຄວາມເປັນເອກະພາບຕໍ່ຄຳຄິດເຫັນຂອງທ່ານປະທານກຳມາທິການກົດໝາຍ ຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມລະຫວ່າງ ອິດສະຕຣາລີ ແລະ ສປປ ລາວ ກໍຄືລະຫວ່າງສອງອົງການນິຕິບັນຍັດ; ພ້ອມທັງເນັ້ນຢ້ຳວ່າໃນເວລາທີ່ປະຕິບັດໜ້າທີ່ທາງການທູດຢູ່ ສປປ ລາວ ຈະສືບຕໍ່ເປັນຂົວຕໍ່ທີ່ດີໃຫ້ແກ່ມິດຕະພາບສອງຝ່າຍ, ໃຫ້ການຊ່ວຍເຫຼືອ ແລະ ຊຸກຍູ້ສົ່ງເສີມການພົວພັນຮ່ວມມືລະຫວ່າງສອງປະເທດກໍຄືສອງອົງການນິຕິບັນຍັດໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນໃນຕໍ່ໜ້າ.

**(ສອນສັກ ວັນວິໄຊ)**

# ຕິດຕາມກວດກາການປະຕິບັດກົດໝາຍຂົງເຂດ ວຽກງານການຕ່າງປະເທດ ຢູ່ 3 ແຂວງພາກເໜືອ



(ສພຊ) - ໃນລະຫວ່າງວັນທີ 11-17 ສິງຫາ 2024, ທ່ານ ຈັນທະວົງ ແສນອາມາດ ມົນຕີ ຮອງປະທານກຳມາທິການການຕ່າງປະເທດພ້ອມດ້ວຍຄະນະ ໄດ້ສຳເລັດການເຄື່ອນໄຫວວຽກງານຢູ່ແຂວງຜົ້ງສາລີ, ຫຼວງນ້ຳທາ ແລະ ອຸດົມໄຊ. ຈຸດປະສົງແມ່ນເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນຂົງເຂດວຽກງານການຕ່າງປະເທດ ກໍຄືການຕິດຕາມການຈັດຕັ້ງປະຕິບັດບັນດາສົນທິສັນຍາ ແລະ ສັນຍາສາກົນທີ່ສປປລາວເປັນພາຄີ ເປັນຕົ້ນ: ການຄຸ້ມຄອງເສັ້ນຊາຍແດນ, ການຄຸ້ມຄອງດ່ານສາກົນ, ການຄຸ້ມຄອງຄົນເຂົ້າ-ອອກເມືອງ, ບັນຫາການຄ້າມະນຸດ, ການແຕ່ງງານທີ່ບໍ່ຖືກຕ້ອງຕາມກົດໝາຍ; ຊຸກຍູ້ການຕິດຕາມກວດກາການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂຄງການຊ່ວຍເຫຼືອລ້າ (ODA), ການລົງທຶນຂອງຕ່າງປະເທດ, ອົງການທີ່ບໍ່ແມ່ນລັດຖະບານ (NGOs), ອົງການຈັດຕັ້ງທາງສັງຄົມ (CSO) ແລະ ອື່ນໆຢູ່ ສປປລາວ ພ້ອມທັງເກັບກຳບັນຫາທີ່ພົ້ນເດັ່ນວຽກງານຂົງເຂດການຕ່າງປະເທດຢູ່ທ້ອງຖິ່ນ ເພື່ອເປັນຂໍ້ມູນລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ.

ໂອກາດດັ່ງກ່າວ, ຄະນະໄດ້ເຂົ້າຢ້ຽມຂໍ່ານັບທ່ານເຈົ້າແຂວງ, ພົບປະຮອງເຈົ້າແຂວງແລະການນຳແຂວງ, ເຮັດວຽກກັບສະພາປະຊາຊົນແຂວງ, ຮັບຟັງການລາຍງານຫຍໍ້ຈາກບັນດາພະແນກການຕ່າງໆອ້ອມຂ້າງແຂວງກ່ຽວກັບວຽກງານການຕ່າງປະເທດ. ພ້ອມດຽວກັນນີ້, ທ່ານຮອງປະທານກຳມາທິການການຕ່າງປະເທດ ກໍໄດ້ເນັ້ນໜັກໃຫ້ພາກສ່ວນທີ່ກ່ຽວຂ້ອງ ເອົາໃຈໃສ່ຕື່ມບາງບັນຫາເຊັ່ນ: ການຈັດຕັ້ງປະຕິບັດລັດຖະທຳມະນູນ, ບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດວຽກງານການຕ່າງປະເທດ, ການຄຸ້ມຄອງໂຄງການລົງທຶນຂອງຕ່າງປະເທດ ເປັນຕົ້ນການແກ້ໄຂບັນຫາຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມໃນຂະແໜງການບໍ່ແຮ່, ການຄຸ້ມຄອງໂຄງການຊ່ວຍເຫຼືອລ້າ, ການຄຸ້ມຄອງຄົນເຂົ້າ-ອອກເມືອງ, ການຄຸ້ມຄອງຄົນຕ່າງປະເທດ ແລະ ບັນຫາອື່ນໆທີ່ສົ່ງຜົນກະທົບເຖິງຊີວິດການເປັນຢູ່ຂອງປະຊາຊົນ.

ຄະນະຍັງໄດ້ເຄື່ອນໄຫວເຮັດວຽກຮ່ວມກັບຄະນະຄຸ້ມຄອງດ່ານສາກົນບໍ່ເຕັນ, ຄະນະຄຸ້ມຄອງເຂດເສດຖະກິດພິເສດແຂວງຫຼວງນ້ຳທາ (ເຂດເສດຖະກິດພິເສດບໍ່ເຕັນແດນງາມ) ແລະ ຢ້ຽມຢາມບັນດາໂຄງການລົງທຶນຂອງຕ່າງປະເທດ, ສະຖານທີ່ທ່ອງທ່ຽວແລະພື້ນຖານການຜະລິດຂອງພໍ່ແມ່ປະຊາຊົນຈຳນວນໜຶ່ງ.

# ການສ້າງຄວາມເຂັ້ມແຂງໃຫ້ສະມາຊິກລັດຖະສະພາເພດຍິງ: ການຮ່ວມມື, ສິ່ງທ້າທາຍ ແລະ ຜົນກະທົບຕໍ່ນະໂຍບາຍສາທາລະນະ



(ສພຊ) - ວັນທີ 08 ສິງຫາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ນາງ ພອນເພັດ ອຸ່ນແກ້ວ ຮອງປະທານຄະນະສະມາຊິກສະພາແຫ່ງຊາດເພດຍິງ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາທາງໄກຮ່ວມກັບເຄືອຂ່າຍສະມາຊິກລັດຖະສະພາເພດຍິງ ກ່ຽວກັບການແລກປ່ຽນບົດຮຽນວຽກງານແມ່ຍິງຂອງ ສປປ ລາວ ໃຫ້ແກ່ສະມາຊິກລັດຖະສະພາເພດຍິງປະເທດອາຊຽນ ໃນຫົວຂໍ້ "ການສ້າງຄວາມເຂັ້ມແຂງໃຫ້ສະມາຊິກລັດຖະສະພາເພດຍິງ: ການຮ່ວມມື, ສິ່ງທ້າທາຍ ແລະ ຜົນກະທົບຕໍ່ນະໂຍບາຍສາທາລະນະ" ໂດຍມີສະມາຊິກລັດຖະສະພາເພດຍິງປະເທດທີ່ຮ່ວມໂຄງການ ເຂົ້າຮ່ວມ; ກອງປະຊຸມຮຽນຮູ້ແບບເພື່ອນມິດສຳລັບສະມາຊິກລັດຖະສະພາໃນປະເທດໄທ, ລາວ, ອິນໂດເນເຊຍ ແລະ ມາເລເຊຍ ໄດ້ຮັບການສະໜັບສະໜູນຈາກມູນນິທິເວສຕ໌ມິນສ໌ເຕີ ເພື່ອປະຊາທິປະໄຕ (Westminster Foundation for Democracy - WFD) ໂດຍການຮ່ວມມືກັບ UNDP ປະເທດໄທ, UN Women Thailand ແລະ ເຄືອຂ່າຍຂອງອົງການຈັດຕັ້ງທາງສັງຄົມໃນປະເທດໄທ ເຊິ່ງເປັນສ່ວນໜຶ່ງຂອງແຜນງານ "ການຊຸກຍູ້ຄວາມສະເໝີພາບຍິງ-ຊາຍ ໂດຍຜ່ານການນຳພາທາງດ້ານການເມືອງຂອງແມ່ຍິງ ແລະ ການມີສ່ວນຮ່ວມໃນອາຊຽນ ໄລຍະທີ II" ທີ່ໄດ້ຮັບທຶນຈາກອົງການ Global Affairs Canada.

ໃນກອງປະຊຸມ, ທ່ານ ນາງ ພອນເພັດ ອຸ່ນແກ້ວ ໄດ້ກ່າວວ່າ: ຄວາມສະເໝີພາບຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ແມ່ນເປົ້າໝາຍໜຶ່ງເພື່ອບັນລຸວາລະປີ 2030 ຂອງການພັດທະນາແບບຍືນຍົງ ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDGs), ວິໄສທັດປະຊາຄົມອາຊຽນ 2025 ລວມທັງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຂອງ ສປປ ລາວ ທັງເປັນປັດໄຈສຳຄັນໃນການຊຸກຍູ້ໃຫ້ປະຊາຄົມອາຊຽນມີຄວາມເຂັ້ມແຂງ, ຍືນຍົງ ແລະ ກວມລວມ; ການມີສ່ວນຮ່ວມຂອງແມ່ຍິງໃນການຕົກລົງບັນຫາສຳຄັນ ແລະ ການມີຕຳແໜ່ງນຳພາຢ່າງສະເໝີພາບກັບເພດຊາຍ ຈະເປັນການຊ່ວຍສະໜັບສະໜູນເຮັດໃຫ້ຊີວິດການເປັນຢູ່ຂອງແມ່ຍິງດີຂຶ້ນ ແລະ ສາມາດປະກອບ ສ່ວນພັດທະນາປະເທດຊາດໃຫ້ຈະເລີນ. ທ່ານຍັງລາຍງານໃຫ້ຮູ້ຕື່ມອີກວ່າ: ສປປ ລາວ ໃຫ້ຄວາມສຳຄັນຕໍ່ບົດບາດ ແລະ ການມີສ່ວນຮ່ວມຂອງເພດຍິງໃນທຸກຂົງເຂດວຽກງານ ເຊິ່ງພົນລະເມືອງລາວຍິງ-ຊາຍ ມີສິດເທົ່າທຽມກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຄອບຄົວ; ສປປ ລາວ ມີແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບການສົ່ງເສີມຄວາມກ້າວໜ້າແລະສິດສະເໝີພາບຍິງ-ຊາຍ; ປັດຈຸບັນ, ຢູ່ ສປປ ລາວ ອັດຕາສ່ວນຂອງເພດຍິງໃນເວທີການເມືອງມີຈຳນວນເພີ່ມຂຶ້ນ ຄືກຳມະການຄະນະບໍລິຫານງານສູນກາງພັກ 16.9%, ສະມາຊິກສະພາແຫ່ງຊາດເພດຍິງ 21.95%, ສະມາຊິກສະພາປະຊາຊົນຂັ້ນແຂວງ 30.48%, ລັດຖະມົນຕີ ແລະ ທຽບເທົ່າ 27.27%, ຮອງລັດຖະມົນຕີແລະທຽບເທົ່າ 23.07%, ຕຳແໜ່ງບໍລິຫານການປົກຄອງຂັ້ນທ້ອງຖິ່ນ 11.89%.

ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX ໄລຍະ 2021-2025 ໄດ້ກຳນົດ 4 ຄາດໝາຍດ້ານບົດບາດຍິງ-ຊາຍ ຄື: 1. ຊຸກຍູ້ສ້າງເງື່ອນໄຂໃຫ້ພະນັກງານນຳພາ-ຄຸ້ມຄອງທີ່ເປັນເພດຍິງທຸກຂັ້ນ ໂດຍສະເລ່ຍໃຫ້ກວມ 20% ຂຶ້ນໄປ; 2. ຊຸກຍູ້ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ບັນຈຸສັບຊ້ອນເຂົ້າເປັນສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາປະຊາຊົນຂັ້ນແຂວງ ເພດຍິງ ກວມ 30% ຂຶ້ນໄປ; 3. ດັດຊະນີຄວາມບໍ່ສະເໝີພາບຍິງ-ຊາຍ ໃຫ້ຫຼຸດລົງຈາກ 0.459 ໃນປີ 2019 ມາເປັນ 0.430 ໃນປີ 2025; 4. ດັດຊະນີການພັດທະນາຄວາມສະເໝີພາບຍິງ-ຊາຍ ໃຫ້ເພີ່ມຂຶ້ນຈາກ 0.927 ໃນປີ 2019 ມາເປັນ 0.984 ໃນປີ 2025.

**(ນາງ ອາລິນ ສຸພົມມະປະກິດ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

(ສພຊ) - ໃນລະຫວ່າງວັນທີ 10-13 ສິງຫາຜ່ານມາ, ທ່ານຄຳໃບດຳລັດຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມງານສັບປະດາອາຊຽນ-ຈີນ ປະຈຳປີ 2024 ທີ່ເມືອງສາງຈໍ້ ແຂວງຊານຊີ ສາທາລະນະລັດປະຊາຊົນຈີນພາຍໃຕ້ຫົວຂໍ້: ຄູ່ຮ່ວມຍຸດທະສາດຮອບດ້ານອາຊຽນ-ຈີນ ເພື່ອບັນລຸຄວາມຈະເລີນສີວິໄລໂດຍຜ່ານນະວັດຕະກຳໃໝ່ ເຊິ່ງມີຜູ້ຕາງໜ້າບັນດາປະເທດສະມາຊິກອາຊຽນເຂົ້າຮ່ວມ.

ທ່ານ ຄຳໃບ ດຳລັດ ໄດ້ຕາງໜ້າຄະນະຜູ້ແທນ ກໍຄືສະພາແຫ່ງຊາດລາວ ຂຶ້ນມີຄຳເຫັນໃນພິທີເປີດ ເຊິ່ງໄດ້ຕີລາຄາສູງຕໍ່ງານສັບປະດາຄັ້ງນີ້ ແມ່ນການເສີມຂະຫຍາຍການເປັນຄູ່ຮ່ວມຍຸດທະສາດຮອບດ້ານອາຊຽນ-ຈີນ ເພື່ອບັນລຸຄວາມຈະເລີນສີວິໄລໂດຍຜ່ານນະວັດຕະກຳໃໝ່ ໂດຍການເອົາໃຈໃສ່ຕໍ່ການຫັນປ່ຽນຢ່າງຫົວຄິດປະດິດສ້າງ ແລະ ການນຳໃຊ້ເຕັກໂນໂລຊີສີຂຽວ ເພື່ອຮັດແໜ້ນການພົວພັນຮ່ວມມືດ້ານການຄ້າ, ການລົງທຶນ, ການສຶກສາ, ຄົມມະນາຄົມ, ວັດທະນະທຳ-ສັງຄົມ, ການທ່ອງທ່ຽວ ແລະອື່ນໆ ທັງຮຽນຮູ້ເຊິ່ງກັນແລະກັນ ເພື່ອຊຸກຍູ້ການເຕີບໂຕທາງດ້ານເສດຖະກິດທີ່ໝັ້ນຄົງ, ຍືນຍົງ ເພື່ອນຳຜົນປະໂຫຍດມາສູ່ບັນດາປະເທດອາຊຽນ ແລະ ສປ ຈີນ.

ໃນໄລຍະຜ່ານມາ, ສປປ ລາວ ໃນນາມເປັນສະມາຊິກອາຊຽນ ໄດ້ເຂົ້າຮ່ວມຢ່າງຕັ້ງໜ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການເປັນຄູ່ຮ່ວມຍຸດທະສາດຮອບດ້ານລະຫວ່າງອາຊຽນ-ຈີນ ແລະ ຊຸກຍູ້ການຮ່ວມມືຮອບດ້ານ ດ້ວຍການເພີ່ມທະວີບັນດາໝາກຜົນທີ່ຕັ້ງໜ້າ, ມຸ່ງໄປສູ່ເປົ້າໝາຍທີ່ສູງກວ່າແລະນຳເອົາຜົນປະໂຫຍດທີ່ຫຼາຍກວ່າ ມາສູ່ອາຊຽນ-ຈີນ ເພື່ອບັນລຸຄວາມຈະເລີນສີວິໄລໂດຍຜ່ານນະວັດຕະກຳໃໝ່ ອາຊຽນ-ຈີນ.

ການເຄື່ອນໄຫວຄັ້ງນີ້, ຄະນະໄດ້ເຂົ້າຢ້ຽມຢາມພົບປະ ທ່ານ ສື ຈິ່ງຈຸ່ນ ເລຂາທິການໃຫຍ່ສູນອາຊຽນ-ຈີນ, ເຊິ່ງທ່ານໄດ້ສະແດງຄວາມຂອບໃຈ ແລະ ຕີລາຄາສູງຕໍ່ການເຂົ້າຮ່ວມງານສັບປະດາ ອາຊຽນ-ຈີນ ປະຈຳປີ 2024 ຂອງຄະນະຜູ້ແທນສະພາແຫ່ງຊາດລາວ ພ້ອມທັງແຈ້ງໃຫ້ຊາບກ່ຽວກັບຄວາມໝາຍຄວາມສຳຄັນຂອງການສ້າງຕັ້ງສູນຈີນ-ອາຊຽນ ແລະການປະກອບສ່ວນຢ່າງຕັ້ງໜ້າຂອງສູນ ເຂົ້າໃນການຊຸກຍູ້ການຮ່ວມມືໃນຂະແໜງການຕ່າງໆລະຫວ່າງ ສປຈີນ ແລະ ສະມາຊິກອາຊຽນ; ສູນຈີນ-ອາຊຽນ ພ້ອມທີ່ຈະສະໜັບສະໜູນສປປລາວ ໃນການເປັນປະທານໝູນວຽນອາຊຽນ, ຊຸກຍູ້ການກໍ່ສ້າງຂໍ້ລິເລີ່ມ “ໜຶ່ງແລວ ໜຶ່ງເສັ້ນທາງ” ຕິດພັນກັບຍຸດທະສາດການພັດທະນາ ແລະ ວິໄສທັດອາ ຊຽນ. ທ່ານ ຄຳໃບ ດຳລັດ ໄດ້ຕີລາຄາສູງຕໍ່ສູນອາຊຽນ-ຈີນ ທີ່ໄດ້ປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການເປັນຄູ່ຮ່ວມຍຸດທະສາດ ອາຊຽນ-ຈີນ ເພື່ອສ້າງສັນຕິພາບ, ມິດຕະພາບ, ສະຖຽນລະພາບ, ຄວາມຈະເລີນຮຸ່ງເຮືອງມາສູ່ຂົງເຂດ ແລະ ພາກພື້ນ.

ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ເຂົ້າຢ້ຽມພົບປະ ສະຫາຍ ຖາງ ເຕິ້ງ ເຈ໋ຍ ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຊານຊີ, ເຊິ່ງສະຫາຍ ຖາງເຕິ້ງເຈ໋ຍ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຂອງຄະນະຜູ້ແທນສະພາແຫ່ງຊາດລາວໃນຄັ້ງນີ້, ພ້ອມທັງແຈ້ງສະພາບການພັດທະນາເສດຖະກິດ-ສັງຄົມຂອງແຂວງຊານຊີ ໃຫ້ຮັບຊາບ. ສະຫາຍ ຄຳໃບ ດຳລັດ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະຕີລາຄາສູງຕໍ່ການເປັນເຈົ້າພາບຈັດງານສັບປະດາອາຊຽນ-ຈີນ ປະຈຳປີ 2024 ໃນຄັ້ງນີ້. ສອງຝ່າຍມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ເຫັນວ່າ ສປປ ລາວ ແລະ ສປຈີນ ເປັນປະເທດເພື່ອນມິດສະຫາຍ, ບ້ານໃກ້ເຮືອນຄຽງ ທີ່ມີສາຍພູ ແລະ ແມ່ນ້ຳຕິດຈອດກັນ, ມີສາຍພົວພັນທີ່ເປັນມູນເຊື້ອມາແຕ່ບູຮານນະການ ເຊິ່ງຜ່ານມາ ການນຳຂັ້ນສູງທັງສອງປະເທດໂດຍແມ່ນສະຫາຍ ສີ ຈິ້ນຜິງ ເລຂາທິການໃຫຍ່, ປະທານປະເທດແຫ່ງສປ ຈີນ ແລະ ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປລາວ ໄດ້ລົງນາມໃນແຜນແມ່ບົດສະບັບໃໝ່ ວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ຈີນ-ລາວ, ລາວ-ຈີນ ເຊິ່ງເປັນພື້ນຖານອັນໜັກແໜ້ນໃຫ້ການພົວພັນຮ່ວມມືລະຫວ່າງສອງພັກ, ສອງລັດ ກໍຄືປະຊາຊົນສອງປະເທດໃນຍຸກສະໄໝໃໝ່; ພ້ອມດຽວກັນນັ້ນ ໃນປີ 2024 ແມ່ນປີແຫ່ງການໄປມາຫາສູ່ກັນລະຫວ່າງ ສປຈີນ ແລະ ບັນດາປະເທດອາຊຽນ, ແຂວງຊານຊີຫວັງຢ່າງຍິ່ງວ່າການເປີດສັບປະດາອາຊຽນ-ຈີນ ປະຈຳປີ 2024 ຈະເປັນໂອກາດອັນດີໃນການຊຸກຍູ້ການຮ່ວມມືໃນຂະແໜງການເສດຖະກິດ, ການຄ້າ-ການລົງທຶນ, ການສຶກສາ, ການພັດທະນາລະບົບພື້ນຖານໂຄງລ່າງ, ການທ່ອງທ່ຽວ ແລະ ຂະແໜງການອື່ນ ເພື່ອເປັນກຳລັງແຮງປະກອບ ສ່ວນສຳຄັນເຂົ້າໃນການກໍ່ສ້າງການເປັນຄູ່ຮ່ວມຊາຕາກຳລະຫວ່າງ ຈີນ-ລາວ, ລາວ-ຈີນ ໃຫ້ນັບມື້ນັບພັດທະນາຍິ່ງໆຂຶ້ນ.

ນອກຈາກນັ້ນ, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ເຄື່ອນໄຫວຢ້ຽມຢາມສະຖານທີ່ທ່ອງທ່ຽວອະນຸລັກລະບົບນິເວດແຄມໜອງນ້ຳ ຂອງເມືອງສາງຈໍ້ ແລະ ວັດຈິ່ນສີ ເຊິ່ງເປັນສະຖານທີ່ສຳຄັນທາງປະຫວັດສາດຂອງແຂວງຊານຊີອີກດ້ວຍ.

# ຕິດຕາມກວດກາການປະຕິບັດບັນດາຄາດໝາຍ ວັດທະນະທຳ-ສັງຄົມ ແລະ ວຽກງານເຜົ່າ



(ສພຊ) - ເພື່ອຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ພະນັກງານທີ່ເປັນເສນາທິການ ແລະ ພະນັກງານ-ລັດຖະກອນໃນຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໃຫ້ມີປະສິດຕິພາບ ແລະ ປະສິດທິຜົນສູງ ໃນການຈັດຕັ້ງປະຕິບັດວຽກງານຕົວຈິງ; ເພື່ອເຊື່ອມຊຶມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ພ້ອມທັງຜັນຂະຫຍາຍພາລະບົດບາດການຕິດຕາມກວດກາ ແລະ ຮັບປະກັນໃຫ້ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານ ໃຫ້ກຳໄດ້ກ່ຽວກັບວຽກງານວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ.

ຕອນເຊົ້າຂອງວັນທີ 9 ສິງຫາ 2024 ທີ່ຫ້ອງປະຊຸມຫ້ອງວ່າການເມືອງປາກແບງ ແຂວງອຸດົມໄຊ ໄດ້ຈັດກອງປະຊຸມສຳມະນາຕິດຕາມກວດກາການຈັດຕັ້ງປະຕິບັດບັນດາຄາດໝາຍວັດທະນະທຳ-ສັງຄົມແລະຄວາມຮູ້ພື້ນຖານກ່ຽວກັບວຽກງານເຜົ່າ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ຄຳພອນ ພິມມະຈັນ ຮອງປະທານສະພາປະຊາຊົນແຂວງອຸດົມໄຊ ແລະ ທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງອຸດົມໄຊ; ເຂົ້າຮ່ວມມີຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການ, ພະແນກພາຍໃນແຂວງ, ສສຂ ປະຈຳເຂດເລືອກຕັ້ງ 7 ເມືອງ, ຕາງໜ້າຫ້ອງການ-ອົງການຂອງເມືອງໃນຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ພະນັກງານວິຊາວິຊາການສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງການນຳສະເໜີ ແລະມີຄຳຄິດຄຳເຫັນແລກປ່ຽນເຊິ່ງກັນແລະກັນ ກ່ຽວກັບການຕິດຕາມກວດກາການຈັດຕັ້ງປະຕິບັດຄາດໝາຍວັດທະນະທຳ-ສັງຄົມ ແລະ ຄວາມຮູ້ພື້ນຖານກ່ຽວກັບວຽກຊົນເຜົ່າ ເພື່ອເຮັດໃຫ້ຜູ້ເຂົ້າຮັບຮູ້ ແລະ ເຂົ້າໃຈຕໍ່ວຽກງານດັ່ງກ່າວ ດີຍິ່ງຂຶ້ນ ເຊິ່ງກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງຫຼືສະເຕັບສ໌(STEPs).

**(ສີແຫວງ ສີບຸນເຮືອງ)**

# ແຂວງສາລະວັນ ປາຖະກະຖາ 5 ວັນປະຫວັດສາດໃນເດືອນສິງຫາ

(ສພຊ) - ເດືອນສິງຫາເປັນເດືອນທີ່ມີ 5 ວັນ ທີ່ມີຄວາມໝາຍຄວາມສຳຄັນທາງດ້ານປະຫວັດສາດອັນຍາວນານຂອງທົ່ວປວງຊົນລາວທັງຊາດ ຄື: ວັນລັດຖະທຳມະນູນ ແຫ່ງ ສປປ ລາວ ຄົບຮອບ 33 ປີ (15 ສິງຫາ 1991-15 ສິງຫາ 2021); ວັນສ້າງຕັ້ງສະພາປະຊາຊົນຂັ້ນແຂວງ ຄົບຮອບ 46 ປີ (4 ສິງຫາ 1978-4 ສິງຫາ 2024); ວັນສ້າງຕັ້ງແນວລາວສ້າງຊາດ ຄົບຮອບ 74 ປີ (13 ສິງຫາ 1950-13 ສິງຫາ 2024); ວັນສ້າງຕັ້ງສື່ມວນຊົນ ແລະ ວັນພິມຈຳໜ່າຍ ຄົບຮອບ 74 ປີ (13 ສິງຫາ 1950-13 ສິງຫາ 2024); ວັນຍຶດອຳນາດທົ່ວປະເທດ ສປປລາວ ຄົບຮອບ 79 ປີ (23 ສິງຫາ 1954-23 ສິງຫາ 2024) ແລະ ຄົບຮອບ 49 ປີ (23 ສິງຫາ 1975-23 ສິງຫາ 2024).



ພິທີປາຖະກະຖາເຜີຍແຜ່ເຊື່ອມຊຶມວັນສຳຄັນຕ່າງໆດັ່ງກ່າວ ໄດ້ຈັດຂຶ້ນຢູ່ທີ່ສະໂມສອນວິທະຍາໄລຄູສາລະວັນ ໃນວັນທີ 13 ສິງຫາ 2024 ໂດຍການປາຖະກະຖາຂອງທ່ານ ສີເຮັງ ຫອມສົມບັດ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງສາລະວັນ; ທ່ານ ສົມເລັດ ຈູລະມະນີ ອະດີດປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14, ອະດີດປະທານແນວລາວສ້າງຊາດແຂວງສາລະວັນ; ທ່ານ ຈັນສະໝອນ ພົມມະແສງ ຄະນະປະຈຳພັກແຂວງ, ຫົວໜ້າຄະນະໂຄສະນາອົບຮົມແຂວງສາລະວັນ; ພ້ອມນັ້ນ, ຍັງມີຮູບພາບສະໄລ, ວິດີໂອການເຄື່ອນໄຫວປະກອບຢ່າງສ້າງສັນ ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພໍ່ແມ່ປະຊາຊົນ ນັກຮຽນຮູ້ປັນຍາຊົນພາຍໃນອ້ອມຂ້າງແຂວງ ທີ່ເຂົ້າຮ່ວມໄດ້ຮັບຮູ້ແລະເຂົ້າໃຈແຈ້ງຂຶ້ນ.

ຕອນບ່າຍຂອງວັນດຽວກັນ, ທີ່ເດີ່ນກິລາຫຍ້າທຽມເພັດລັງສີ ໄດ້ຈັດກິດຈະກຳແຂ່ງຂັນກິລາບານເຕະຊາຍນັດພິເສດ ທີມປະສົມ ລະຫວ່າງທີມສະພາປະຊາຊົນແຂວງ+ຄະນະໂຄສະນາອົບຮົມແຂວງພົບກັບທີມປະສົມແນວລາວສ້າງຊາດແຂວງ+ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ໂດຍການເຂົ້າຮ່ວມຊົມຮ່ວມເຊຍຂອງພະນັກງານ-ລັດຖະກອນຢ່າງເປັນຂະບວນການຄຶກຄື້ນ.

ທັງນີ້, ກໍເພື່ອເປັນການສ້າງຂະບວນການຮັບຕ້ອນ 5 ວັນສຳຄັນດັ່ງກ່າວ ສືບຕໍ່ຮັດແໜ້ນຄວາມສາມັກຄີ ແລະ ການປະສານງານສະໜັບສະໜູນເຊິ່ງກັນແລະກັນ ໃຫ້ແໜ້ນແຟ້ນຂຶ້ນກວ່າເກົ່າ ທັງເປັນການສົ່ງເສີມການອອກກຳລັງກາຍ ແລະກາຍເປັນແບບຢ່າງທີ່ດີໃຫ້ແກ່ຊາວໜຸ່ມ-ໄວໜຸ່ມໄດ້ຫັນມາຫຼິ້ນກິລາເພື່ອຮັກສາສຸຂະພາບ ແລະ ຫ່າງໄກຈາກສິ່ງເສບຕິດປະເພດຕ່າງໆ.

**(ດີລຳພົນ ພົມມະຈັນ)**

# ບັນດາ ສພຂ ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7



(ສພຊ) - ໃນເດືອນກໍລະກົດ ຫາຕົ້ນເດືອນສິງຫາຜ່ານມາ ສະພາປະຊາຊົນຂັ້ນແຂວງ (ສພຂ) ຊຸດທີ II ໃນທົ່ວປະເທດ ໄດ້ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງຕົນຂຶ້ນ ເພື່ອຮັບຟັງ, ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024 ຂອງແຂວງ; ບົດລາຍງານແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ ແລະທິດທາງແຜນການ6ເດືອນທ້າຍປີ 2024 ຂອງແຂວງ; ບົດລາຍງານການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງແຂວງ; ພິຈາລະນາຮັບຮອງເອົາການຈັດຕັ້ງປະຕິບັດ ບັນດາຄາດໝາຍພັດທະນາຊົນນະບົດແລະລຶບລ້າງຄວາມທຸກຍາກປີ2021 ເຖິງປັດຈຸບັນ ແລະ ແຜນການໃນຕໍ່ໜ້າຢູ່ແຂວງອຸດົມໄຊ;ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳ 6 ເດືອນຕົ້ນປີ2024ແລະທິດທາງແຜນການ 6 ເດືອນທ້າຍປີ 2024 ຂອງສະພາປະຊາຊົນແຂວງ. ພ້ອມດຽວກັນນັ້ນ, ບັນດາ ສພຂ ຍັງໄດ້ຮັບຟັງ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງແຂວງຕົນຕື່ມອີກຈຳນວນໜຶ່ງ ເປັນຕົ້ນແມ່ນ:

ສພຂ ອຸດົມໄຊ ຍັງຮັບຟັງບົດລາຍງານການຈັດຕັ້ງປະຕິບັດການຂຸດຄົ້ນແຮ່ທາດ ຢູ່ແຂວງອຸດົມໄຊ ແຕ່ປີ 2021 ເຖິງປັດຈຸບັນ ແລະ ແຜນການໃນຕໍ່ໜ້າ, ພິຈາລະນາ ແລະ ຮັບຮອງເອົາການສ້າງນິຕິກຳໃຕ້ກົດໝາຍ (ຂໍ້ຕົກລົງເຈົ້າແຂວງ) ຈຳນວນ 3 ສະບັບ (ສ້າງໃໝ່) ຄື: ຂໍ້ຕົກລົງວ່າດ້ວຍການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳແຂວງອຸດົມໄຊ; ຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດບໍລິການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານຢູ່ແຂວງອຸດົມໄຊແລະຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການບໍລິການ, ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຢູ່ແຂວອຸດົມໄຊ.

ສພຂ ຫຼວງພະບາງ ໄດ້ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງການຂຸດຄົ້ນແຮ່ທາດຢູ່ແຂວງຫຼວງພະບາງ ປະຈຳ 6 ເດືອນຕົ້ນປີ ແລະ ວາງທິດທາງແຜນການ ປະຈຳ 6 ເດືອນທ້າຍປີ 2024 ໄດ້ຮັບຮອງເອົາບົດລາຍງານການຕິດຕາມກວດກາກົດໝາຍໃນຂົງເຂດການດຳເນີນຄະດີຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການປະຈຳ 6 ເດືອນ ທ້າຍປີ 2024.



ສພຂ ຫົວພັນ ໄດ້ພິຈາລະນາແລະຮັບຮອງການເລືອກຕັ້ງຕຳແໜ່ງບໍລິຫານຂັ້ນຕ່າງໆພາຍໃນ ສພຂ ຄື: ເລືອກຕັ້ງເອົາທ່ານ ຄຳຟອງ ກົ້ວມີໄຊ ເລຂາທິການສະພາປະຊາຊົນແຂວງຫົວພັນ ເປັນຮອງປະທານສະພາປະຊາຊົນແຂວງຫົວພັນ;ເລືອກຕັ້ງເອົາທ່ານ ປອ. ຄອນເສີດ ດອນວິໄຊ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນແຂວງ, ຮອງປະທານຄະນະກວດກາພັກ, ຮອງປະທານອົງການກວດກາລັດແຂວງຫົວພັນ ເປັນເລຂາທິການສະພາປະຊາຊົນແຂວງຫົວພັນ.



ສພຂ ວຽງຈັນ ໄດ້ພິຈາລະນາ ແລະ ຮັບຮອງເອົານິຕິກຳໃຕ້ກົດໝາຍຈຳນວນ 1 ສະບັບ ຄື:ຂໍ້ຕົກລົງຂອງເຈົ້າແຂວງວຽງຈັນ ວ່າດ້ວຍການຄຸ້ມຄອງກິດຈະການທ່ອງທ່ຽວທາງນ້ຳ.

ສພຂ ບໍລິຄຳໄຊ ໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງບໍລິຄຳໄຊ ຈຳນວນ 2 ສະບັບ ຄື: ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ພັດທະນາດິນກະສິກຳ ໃນຂົງເຂດຊົນລະປະທານ ແລະ ຂໍ້ຕົກລົງວ່າດ້ວຍການມີສ່ວນຮ່ວມຂອງສັງຄົມໃນວຽກງານສຶກສາ; ນອກຈາກນີ້, ຍັງໄດ້ພິຈາລະນາແລະຮັບຮອງເອົານິຕິກຳໃຕກົດໝາຍ (ຂໍ້ຕົກລົງຂອງເຈົ້າແຂວງ) ຈຳນວນ 3 ສະບັບ ຄື: ຮ່າງຂໍ້ຕົກລົງວ່າດວ້ຍການຄຸ້ມຄອງໂຄງການເຂດປ່າປ້ອງກັນແຫຼ່ງນ້ຳເຂດອ່າງໂຕ່ງນ້ຳຍ້ອງຕອນໃຕ້, ຮ່າງຂໍ້ຕົກລົງວ່າດວ້ຍການສ້າງຕັ້ງກອງທຶນໄພພິບັດຂັ້ນແຂວງ ແລະ ຮ່າງຂໍ້ຕົກລົງວ່າດ້ວຍເຂດສະຫງວນດິນແຄມນ້ຳ ທົ່ວແຂວງບໍລິຄຳໄຊ.

ສພຂ ຄຳມ່ວນ ໄດ້ພິຈາລະນາ ແລະ ຮັບຮອງບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງນຳໃຊ້ທີ່ດິນກະສິກຳຢູ່ແຂວງຄຳມ່ວນ ສະບັບເລກທີ 333/ຈຂ.ຄມ, ລົງວັນທີ 3 ມີນາ 2020; ພ້ອມດຽວກັນ, ຍັງໄດ້ເນັ້ນໜັກຕໍ່ການສ້າງຂໍ້ຕົກລົງຂອງເຈົ້າແຂວງ ຈຳນວນ5ສະບັບທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 8 ໃຫ້ສອດຄ່ອງກັບກັບຂັ້ນຕອນຂອງການສ້າງນິຕິກຳ ແລະ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ໃນແຕ່ລະໄລຍະ, ຍົກສູງຄຸນນະພາບໃນການປະຕິບັດ 3 ພາລະບົດບາດຂອງ ສພຂ, ຮ່ວມກັບອົງການປົກຄອງ ເພື່ອແກ້ໄຂບັນຫາຄວາມເຄັ່ງຮ້ອນຂອງສັງຄົມຢ່າງທັນການ.

ສພຂ ສາລະວັນ ໄດ້ພິຈາລະນາ ແລະ ຮັບຮອງເອົາການສ້າງ ແລະ ປັບປຸງນິຕິກຳສຳຄັນຂອງແຂວງ ຈຳນວນ 2 ສະບັບ ຄື: ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງອາຫານປອດໄພ ຕາມຮ້ານອາຫານພາຍໃນແຂວງສາລະວັນ (ສ້າງໃໝ່) ແລະ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດຢູ່ແຂວງສາລະວັນ(ປັບປຸງ).

ສພຂ ອັດຕະປື ໄດ້ຮັບຮອງເອົາຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທີ່ດິນທົ່ວແຂວງອັດຕະປື ແລະ ຜົນການປະເມີນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍກອງທຶນຊ່ວຍເຫຼືອເຊິ່ງກັນແລະກັນ.

ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 7 ຂອງບັນດາ ສພຂ ຊຸດທີ II ແມ່ນໝາກຜົນແຫ່ງສະຕິປັນຍາ, ສິດປະຊາທິປະໄຕ ກໍຄືການຍົກສູງຄວາມຮັບຜິດຊອບຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ,ບັນດາທ່ານຜູ້ແທນກອງປະຊຸມເປັນບ່ອນອີງ,ເປັນຂໍ້ມູນໃຫ້ອົງການປົກຄອງແຂວງ ແລະ ທຸກພາກສ່ວນກ່ຽວຂ້ອງ ນຳໄປແກ້ໄຂ ບັນຫາຄວາມຫຍຸ້ງຍາກຕ່າງໆ ຢູ່ພາຍໃນບັນດາແຂວງໃຫ້ມີຜົນສຳເລັດເປັນຢ່າງດີ.

**(ນັກຂ່າວ ສພຂ)**

# ອົບຮົມການສ້າງ, ຄຸ້ມຄອງນຳໃຊ້ເວັບໄຊ ຂອງ ສພຂ ຄຳມ່ວນ ແລະ ການເຂົ້າເຖິງເຄືອຂ່າຍພາຍໃນສະພາແຫ່ງຊາດ

(ສພຊ) - ໃນລະຫວ່າງວັນທີ 6-8 ສິງຫາ 2024 ທີ່ສຳນັກງານສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ຈັດກອງປະຊຸມເຝິກອົບຮົມກ່ຽວກັບການສ້າງ,ຄຸ້ມຄອງນຳໃຊ້ເວັບໄຊຂອງ ສພຂ ຄຳມ່ວນ ແລະ ການເຂົ້າເຖິງເຄືອຄ່າຍພາຍໃນສະພາແຫ່ງຊາດ ໃຫ້ແກ່ພະນັກງານຂະແໜງການຂອງ ສພຂ ໂດຍການເປັນປະທານຂອງທ່ານ ສະເຫຼີມສັກ ແກ້ວຈັນທະລາ ເລຂາທິການ ສພຂ ຄຳມ່ວນ; ເຂົ້າຮ່ວມມີຄະນະເລຂາທິການ, ວິທະຍາກອນຈາກພະແນກເຕັກໂນໂລຊີແລະການສື່ສານແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງຕະຫຼອດຮອດພະນັກງານ ສພຂ ຄຳມ່ວນເຂົ້າຮ່ວມ.



ກອງປະຊຸມໄດ້ຮຽນຮູ້ກ່ຽວກັບການສ້າງ ແລະ ຄຸ້ມຄອງນຳໃຊ້ເວັບໄຊ ສພຂ ຄຳມ່ວນ, ການຕິດຕັ້ງ WordPress, ການບໍລິຫານຈັດການເວັບໄຊ, ການປັບແຕ່ງ ແລະ ແກ້ໄຂໜ້າເວັບໄຊ, ການບໍລິຫານຈັດການ hosting- ການ backup ຂໍ້ມູນເວັບໄຊ, ການສະໝັກການນຳໃຊ້ລະບົບເຄືອຂ່າຍພາຍໃນສະພາແຫ່ງຊາດ, ການເຂົ້າເຖິງ ແລະ ຊອກຫາເອກະສານແລະນິຕິກຳຂອງສະພາແຫ່ງຊາດ, ສພຂ ແລະ ບັນດາອົງການລັດ ໃນລະບົບເຄືອຄ່າຍພາຍໃນ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມ ໄດ້ຈັດແບ່ງກຸ່ມ ແລະ ເຮັດເຝິກຫັດຕົວຈິງ, ໃນການນຳໃຊ້ເວັບໄຊ, ຂຽນບົດຂ່າວລົງໜ້າເວັບໄຊ ແລະ ລົງທະບຽນສະໝັກເຂົ້ານຳໃຊ້ເຄື່ອຄ່າຍດັ່ງກ່າວ ແລະ ທົດລອງນຳໃຊ້ຕົວຈິງໃນການເຂົ້າລະບົບ ແລະ ຊອກຄົ້ນບັນດາເອກະສານທີ່ຕ້ອງການ, ໃຫ້ມີຄວາມປອດໄພ ເພື່ອເຮັດໃຫ້ສາມາດເຂົ້າໃຈຢ່າງຈະແຈ້ງ ແລະ ສາມາດນຳໃຊ້ໄດ້ຢ່າງຄ່ອງຕົວພ້ອມທັງໄດ້ມີການກວດແກ້, ສົນທະນາຖາມ-ຕອບ ແລະແລກປ່ຽນຄຳຄິດຄຳເຫັນ ໃນຫົວຂໍ້ທີ່ມີຄວາມສົນໃຈ.

ກອງປະຊຸມ ທ່ານ ສະເຫຼີມສັກ ແກ້ວຈັນທະລາ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມວ່າ: ກອງປະຊຸມເຝິກອົບຮົມ ຄັ້ງນີ້ແມ່ນເພື່ອຍົກລະດັບຄວາມຮູ້, ຄວາມສາມາດ ແລະ ພັດທະນາທາງດ້ານວິຊາການ ໃຫ້ທ່ວງທັນກັບສະພາບໃນໄລຍະໃໝ່ ໃຫ້ພະນັກງານ ສພຂ ທັງເປັນການຍົກສູງຄຸນນະພາບຂອງວຽກງານຮອບດ້ານໃຫ້ແກ່ສພຂ ໃນການໂຄສະນາເຜີຍແຜ່ການເຄື່ອນໄຫວວຽກງານຂອງອົງການນິຕິບັນຍັດ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດ 3 ພາລະບົດບາດ ຂອງສະພາປະຊາຊົນຂັ້ນແຂວງ ໃຫ້ບັນດາອົງການຈັດຕັ້ງຂັ້ນແຂວງແລະຂັ້ນເມືອງ, ມວນຊົນຮັບຮູ້ ແລະ ເຂົ້າໃຈຢ່າງກວ້າງຂວາງ; ພ້ອມນັ້ນ, ທ່ານຍັງໄດ້ຮຽກຮ້ອງມາຍັງບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ເອົາໃຈໃສ່ສືບຕໍ່ນຳເອົາບົດຮຽນໃນຄັ້ງນີ້ ນຳໃຊ້ເຂົ້າໃນການຄົ້ນຄວ້າ ແລະ ສະໜອງຂໍ້ມູນໃຫ້ມີຄວາມວ່ອງໄວ, ຖືກຕ້ອງເປັນເສນາທິການຮອບດ້ານໃຫ້ແກ່ ສພຂ, ຄະນະປະຈຳ ສພຂ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ.

**(ເອື້ອ ມະໂນສິງ)**




## ປະທານ...

(ຕໍ່ຈາກໜ້າ 1)

(ສພຊ)-ຕອບສະໜອງຕາມການເຊື້ອເຊີນຂອງສະຫາຍ ພົຕ. ເລ ເຕິນ ເຕີຍ (Lê T n T i) ກຳມະການສູນກາງພັກກອມມູນິດຫວຽດນາມ, ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ສະຫາຍ ພົຕ. ປອ. ວົງສັກ ພັນທະວົງ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ(ກປຊສ) ໄດ້ໄປຢ້ຽມຢາມ ແລະເຮັດວຽກຢູ່ສສ.ຫວຽດນາມ ໃນລະຫວ່າງວັນທີ 12-17 ສິງຫາ 2024 ເພື່ອປະຕິບັດເນື້ອໃນຈິດໃຈບົດບັນທຶກຊ່ວຍຈຳວ່າດ້ວຍການຮ່ວມມືຂອງສະພາແຫ່ງຊາດລາວ ແລະ ຫວຽດນາມ, ສືບຕໍ່ປະກອບສ່ວນສຳຄັນໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດແລະການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດແລະປະຊາຊົນສອງຊາດລາວ-ຫວຽດນາມ ກໍຄືລະຫວ່າງສອງອົງການນິຕິບັນຍັດ ແລະ ສອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ນັບມື້ເຂົ້າສູ່ລວງເລິກ ແລະ ຈະເລີນງອກງາມຍິ່ງໆຂຶ້ນ.

ໃນໄລຍະຢ້ຽມຢາມ, ທີ່ສະພາແຫ່ງຊາດຫວຽດນາມ ໄດ້ມີການພົບປະສອງຝ່າຍລະຫວ່າງສະຫາຍ ພົຕ. ປອ. ວົງສັກ ພັນທະວົງ ກັບ ສະຫາຍ ພົຕ. ເລ ເຕິນເຕີຍພ້ອມດ້ວຍຄະນະຂອງສອງຝ່າຍ ເຊິ່ງສະຫາຍ ພົຕ. ເລ ເຕິນເຕີຍ ໄດ້ກ່າວສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະເປັນກັນເອງຖານສະຫາຍອ້າຍນ້ອງ ຕໍ່ຄະນະຜູ້ແທນສະພາແຫ່ງຊາດລາວ. ສອງຝ່າຍໄດ້ຮ່ວມກັນຕີລາຄາຄືນສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງອົງການນິຕິບັນຍັດ ກໍຄືສອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງຕະຫຼອດມາ ເຊິ່ງມີການແລກປ່ຽນການຢ້ຽມຢາມ ແລະຂໍ້ມູນຂ່າວສານທີ່ມີຄວາມສົນໃຈນຳກັນຢ່າງປົກກະຕິ ໂດຍສະເພາະການຈັດຕັ້ງປະຕິບັດພາລະບົດບາດ ແລະ ໜ້າທີ່ຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນເຄິ່ງສະໄໝຜ່ານມາຂອງສະພາແຫ່ງຊາດຊຸດປັດຈຸບັນ; ສອງຝ່າຍຮ່ວມກັນທົບທວນຄືນການຮ່ວມມືຂອງສອງກຳມາທິການໃນໄລຍະຜ່ານມາ ເຫັນວ່າໄດ້ຮັບການເສີມຂະຫຍາຍຢ່າງຕັ້ງໜ້າ ໂດຍໄດ້ແລກປ່ຽນຄຳຄິດຄຳເຫັນນຳກັນຢ່າງຈິງໃຈ, ແທດຕົວຈິງ ໃນການປະຕິບັດໜ້າທີ່ຂອງສອງກຳມາທິການ. ພິເສດ, ໃນການຢ້ຽມຢາມ ແລະ ແລກປ່ຽນບົດຮຽນຄັ້ງນີ້, ສອງຝ່າຍໄດ້ລົງເລິກແລກປ່ຽນບົດຮຽນ ປະສົບການໃນການສ້າງກົດໝາຍ ແລະນິຕິກຳຕ່າງໆ ໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ(ປກຊ-ປກສ), ການຕິດຕາມກວດກາເຊິ່ງສອງຝ່າຍພິຈາລະນາການຕິດຕາມກວດກາຮ່ວມກັນ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດສັນຍາ, ສົນທິສັນຍາ ທີ່ສອງລັດຖະບານໄດ້ລົງນາມຮ່ວມກັນ ເປັນຕົ້ນບັນດາການຮ່ວມມືໃນການພັດທະນາຊົນນະບົດ, ການພັດທະນາໝູ່ບ້ານລຽບຕາມຊາຍແດນ, ການຮ່ວມມືຂົງເຂດວຽກງານ ປກຊ-ປກສ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດໃນຕໍ່ໜ້າໄດ້ຮັບຜົນດີ.

ພາຍຫຼັງການພົບປະສອງຝ່າຍ, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ເຂົ້າຢ້ຽມຂ່ຳນັບສະຫາຍ ພົທ. ເຈິ່ນ ກວາງ ເຝືອງ (Trần Quang Phương) ກຳມະການສູນກາງພັກກອມມູນິດຫວຽດນາມ, ຮອງປະທານສະພາແຫ່ງຊາດ ເຊິ່ງໄດ້ດຳເນີນໄປດ້ວຍບັນຍາກາດອົບອຸ່ນ, ເປັນກັນເອງຖານສະຫາຍອ້າຍນ້ອງ. ສະຫາຍ ພົຕ. ປອ. ວົງສັກ ພັນທະວົງ ໄດ້ສະແດງຄວາມຂອບໃຈທີ່ສະຫາຍຮອງປະທານສະພາແຫ່ງຊາດໃຫ້ການຕ້ອນຮັບໃນຄັ້ງນີ້ ພ້ອມທັງແຈ້ງໃຫ້ຊາບຜົນສຳເລັດການພົບປະສອງຝ່າຍ. ສະຫາຍຮອງປະທານສະພາແຫ່ງຊາດ ກໍໄດ້ຊີ້ນຳໃຫ້ສອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບສືບຕໍ່ຮັກສາມູນເຊື້ອການຮ່ວມມືກັນໃຫ້ນັບມື້ເຂົ້າສູ່ລວງເລິກ.

ໃນວັນທີ 13 ສິງຫາ, ຄະນະຍັງໄດ້ຢ້ຽມຢາມສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ປະຈຳ ສສ.ຫວຽດນາມ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ໂດຍມີທ່ານ ນາງ ຄຳເຜົາ ເອີນທະວັນ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສປປ ລາວ ປະຈຳ ສສ. ຫວຽດ ນາມ ພ້ອມດ້ວຍຄະນະນຳ, ພະນັກງານສະຖານທູດ, ພະນັກງານການບິນລາວ ແລະ ບັນດາຜູ້ຕາງໜ້ານັກສຶກສາລາວທີ່ກຳລັງຮ່ຳຮຽນຢູ່ສະຖາບັນການສຶກສາໃນນະຄອນຫຼວງຮ່າໂນ້ຍເຂົ້າຮ່ວມຮັບຟັງ.

ນອກຈາກເຄື່ອນໄຫວວຽກງານຢູ່ນະຄອນຫຼວງຮ່າໂນ້ຍແລ້ວ, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ໄປຢ້ຽມຢາມແຂວງແທ່ງຫວາ (Thanh Hóa) ເຊິ່ງໄດ້ພົບປະເຮັດວຽກກັບສະພາປະຊາຊົນແຂວງ, ກອງບັນຊາການທະຫານແຂວງ, ກອງບັນຊາການທະຫານຊາຍແດນແຂວງ ແລະ ກອງບັນຊາການຕຳຫຼວດແຂວງ ພ້ອມທັງຢ້ຽມຢາມພື້ນຖານທາງດ້ານເສດຖະກິດຈຳນວນໜຶ່ງຂອງແຂວງອີກດ້ວຍ.

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວວ່າ: ສະພາແຫ່ງຊາດ, ລັດຖະບານ, ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ມີບົດບາດສຳຄັນໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ໃຫ້ເປັນອັນລະອຽດເຂົ້າໃນການສ້າງແລະປັບປຸງກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ການຕິດຕາມກວດກາຄວາມຮັບຜິດຊອບຂອງການຈັດຕັ້ງ ແລະ ບຸກຄົນ, ການຢັ້ງຢືນຄວາມຖືກຕ້ອງສອດຄ່ອງກັບກົດໝາຍ, ລະບຽບການ ແລະ ວຽກງານສຳຄັນອື່ນໆ ແນໃສ່ສ້າງລັດຂອງພວກເຮົາໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍເທື່ອລະກ້າວ ເຮັດໃຫ້ເສດຖະກິດ-ສັງຄົມມີຄວາມເຂັ້ມແຂງ, ແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມ, ການລະເມີດກົດໝາຍ ໃຫ້ຫຼຸດໜ້ອຍລົງ, ແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເຊິ່ງເປັນບັນຫາເຄັ່ງຮ້ອນຂອງສັງຄົມ ເປັນຕົ້ນບັນຫາເງິນກີບອ່ອນຄ່າ, ອັດຕາແລກປ່ຽນເໜັງຕີງແຮງ, ການຄຸ້ມຄອງສິນຄ້າທີ່ພາຍໃນສາມາດຜະລິດໄດ້, ຊຸກຍູ້ການຜະລິດເປັນສິນຄ້າໃຫ້ຂະຫຍາຍຕົວ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ດີຂຶ້ນ; ຕະຫຼອດໄລຍະເວລາທີ່ຜ່ານມາ ລັດຖະບານກໍໄດ້ມີຄວາມພະຍາຍາມສູງໃນການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມສະພາແຫ່ງຊາດ ໂດຍສະເພາະມະຕິວ່າດ້ວຍການຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ-ເງິນຕາແຫ່ງລັດ ໄດ້ຮັບຜົນສຳເລັດເປັນກ້າວໆ, ຫຼາຍບັນຫາໄດ້ຮັບການປັບປຸງແກ້ໄຂ ເຮັດໃຫ້ພໍ່ແມ່ປະຊາຊົນຍັງສືບຕໍ່ມີຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈຕໍ່ການນຳພາຂອງພັກ-ລັດເຮົາ. ທ່ານຍັງໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມກອງປະຊຸມ ເອົາໃຈໃສ່ລາຍງານບັນຫາຕ່າງໆ ໂດຍສະເພາະແມ່ນການກຳນົດກົນໄກ, ວິທີການທີ່ຈະແກ້ໄຂໃນຕໍ່ໜ້າໃຫ້ລະອຽດ, ຊັດເຈນ, ສອດຄ່ອງກັບສະພາບຄວາມເປັນຈິງ, ຍົກໃຫ້ເຫັນຢ່າງຄົບຖ້ວນບັນຫາທີ່ເກີດຂຶ້ນ ແລະ ສຸມໃສ່ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ ເພື່ອສະ ເໜີວິທີແກ້ໄຂ ເພື່ອປຶກສາຫາລືໃຫ້ມີຄວາມເປັນເອກະພາບ ແລະ ເຮັດໃຫ້ຜົນການຕົກລົງຂອງກອງປະຊຸມເປັນບ່ອນອີງໃຫ້ບັນດາອົງການຈັດຕັ້ງລັດທຸກຂັ້ນ ນຳໄປຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດໄດ້ຢ່າງມີປະສິດທິພາບສູງຂຶ້ນເລື້ອຍໆ, ປະກອບສ່ວນນຳເອົາປະເທດເຮົາກ້າວຂຶ້ນຢ່າງໜັກແໜ້ນ.

ໃນກອງປະຊຸມ, ໄດ້ຮັບຟັງບົດລາຍງານສະພາບການພັດທະນາ, ຄຸ້ມຄອງໂຄງການແຮ່ທາດ ແລະ ສະເໜີທິດທາງໃນຕໍ່ໜ້າ; ການກະກຽມການຮ່າງແຜນການລົງທຶນປີ 2025; ການແກ້ໄຂຜົນການກວດສອບ ແລະສະເໜີທິດທາງ ແລະ ມາດຕະການແກ້ໄຂຜົນການກວດສອບໃນຕໍ່ໜ້າ; ການກະກຽມການຮ່າງແຜນງົບປະມານປີ 2025; ດັດສົມລາຄານ້ຳມັນເຊື້ອໄຟຕາມມະຕິເລກທີ 103/ຄປຈ, ລົງວັນທີ 09/5/2022 ແລະ ມະຕິເລກທີ 168/ຄປຈ, ລົງວັນທີ 06/6/2022; ມາດຕະການໃນການສົ່ງເສີມການຜະລິດພາຍໃນ, ການຄຸ້ມຄອງລາຄາສິນຄ້າ, ການນຳເຂົ້າ (ຈຳກັດ) ສິນ ຄ້າຟຸມເຟືອຍ, ສິນຄ້າທີ່ພາຍໃນຜະລິດໄດ້ແລະຄຸ້ມຄອງການສົ່ງອອກສິນຄ້າ; ບົດລາຍງານກ່ຽວກັບມາດຕະການໃນການນຳເຂົ້ານ້ຳມັນເຊື້ອໄຟ ແລະ ການສົ່ງເສີມການຜະລິດ-ປຸງແຕ່ງພາຍໃນ; ການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ, ການໂຄສະນາເຜີຍແຜ່ກົດໝາຍ; ການຕີລາຄາກົນໄກປະສານງານລະຫວ່າງສະພາແຫ່ງຊາດ ກັບ ລັດຖະບານ ແລະ ຂໍ້ສະເໜີ. ພ້ອມກັນນັ້ນ, ກໍໄດ້ຮັບຟັງການປະກອບຄຳເຫັນຈາກຕາງໜ້າ ຄປຈສພຊ ຕໍ່ບັນດາບົດລາຍງານຂອງລັດຖະບານ ແລະ ການປະກອບຄຳເຫັນຈາກຕາງໜ້າ ຄລບ ຕໍ່ການຕີລາຄາກົນໄກປະສານງານລະຫວ່າງສະພາແຫ່ງຊາດ ກັບ ລັດຖະບານ ແລະ ຂໍ້ສະເໜີ. ຫຼັງຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ສຸມໃສ່ຄົ້ນຄວ້າ, ປຶກສາຫາລື ແລະ ປະກອບຄຳເຫັນໃຫ້ມີຄວາມເປັນເອກະພາບຕໍ່ວິທີການແກ້ໄຂບັນຫາຕ່າງໆ ໂດຍສະເພາະການແກ້ໄຂບັນຫາເສດຖະກິດ-ການເງິນ ເພື່ອເຮັດໃຫ້ຄວາມຫຍຸ້ງຍາກທີ່ເກີດຂຶ້ນ ແລະ ແຜ່ລາມໃນສັງຄົມປັດຈຸບັນ ໄດ້ຮັບການປັບປຸງແກ້ໄຂຢ່າງມີປະສິດທິຜົນ ແນໃສ່ເຮັດໃຫ້ປະເທດຊາດສືບຕໍ່ມີສະຖຽນລະພາບທາງດ້ານການເມືອງທີ່ໜັກແໜ້ນ, ສັງຄົມມີຄວາມສະຫງົບ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການປັບປຸງໃຫ້ນັບມື້ດີຂຶ້ນ.

**(ນາງ ອາລິນ ສຸພົມມະປະກິດ)**

## ພົທ. ສຸວອນ...

(ຕໍ່ຈາກໜ້າ 1)

ຊາການ ເຂົ້າຮ່ວມຢ່າງພ້ອມພຽງ. ຈຸດປະສົງແມ່ນເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ຊຸດທີ II ແນໃສ່ເຮັດໃຫ້ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ແລະເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ ເວົ້າລວມ, ເວົ້າສະເພາະວຽກງານຂອງສະພາແຫ່ງຊາດກໍຄືສະພາປະຊາຊົນຂັ້ນແຂວງລວມທັງພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສສຊ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ເລິກເຊິ່ງກວ່າເກົ່າ.

ຫຼັງຈາກໄດ້ຮັບຟັງບົດລາຍງານການຈັດຕັ້ງປະຕິບັດວຽກງານຂອງກອງບັນຊາການທະຫານອາກາດ, ທ່ານ ຄຳຜອງ ແສງສະຫວ່າງ ສສຊ ປະຈຳເຂດເລືອກຕັ້ງທີ 1, ຮອງປະທານຄະນະກຳມະການຍຸຕິທຳແລະປກສ-ປກຊ ໄດ້ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສປນວ ຊຸດທີ II. ທ່ານ ພົທ. ສຸວອນ ເລືອງບຸນມີ ກໍໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມຄັ້ງນີ້ ດຳເນີນແຕ່ວັນທີ 10 ມິຖຸນາ ຫາ 02 ກໍລະກົດ 2024 ລວມ 17 ວັນ ໄດ້ພິຈາລະນາ,ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍອອກເປັນມະຕິ 6 ສະບັບ ແລະ ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ 13 ສະບັບ ໃນນີ້, ກົດໝາຍສ້າງໃໝ່ 2 ສະບັບຄື: ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ ແລະ ຮ່າງກົດໝາຍວ່າດ້ວຍສະຫະກອນ; ກົດໝາຍປັບປຸງ 11 ສະບັບຄື: 1) ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານເຊື້ອເອັດຈ໌ໄອວີ/ພະຍາດເອດ, 2) ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, 3) ກົດໝາຍວ່າດ້ວຍການຕ້ານສະກັດກັ້ນການຟອກເງິນ ແລະການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, 4) ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, 5) ກົດໝາຍວ່າດ້ວຍການທ່ອງທ່ຽວ, 6) ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, 7) ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ, 8.) ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, 9) ກົດໝາຍວ່າດ້ວຍສະພາແຫ່ງຊາດ, 10) ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, 11) ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ວຽກງານສະພາແຫ່ງຊາດ ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 6 ຫາເທື່ອທີ 7 ແລະ ແຜນການເຄື່ອນໄຫວຮອດກອງປະຊຸມສະໄໝສາມັນເທື່ອທີ 8. ຫຼັງຈາກນັ້ນ ໄດ້ຮັບຟັງບັນຫາ, ຂໍ້ສະເໜີ, ຄວາມຂັດຂ້ອງໝອງໃຈຈາກນາຍ-ພົນທະຫານ ເຊິ່ງບາງບັນຫາກໍໄດ້ຕອບກັບທີ່, ສ່ວນບັນຫາທີ່ກ່ຽວຂ້ອງກັບຫຼາຍພາກສ່ວນ ກໍຈະນຳໄປສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງແກ້ໄຂໃນໂອກາດຕໍ່ໄປ.

ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານຮອບດ້ານທີ່ກອງບັນຊາການທະຫານອາກາດ ຍາດມາໄດ້ໃນໄລຍະຜ່ານມາ, ຕີລາຄາສູງຕໍ່ການປະກອບສ່ວນໃນການປົກປັກຮັກສາແລະພັດທະນາປະເທດຊາດຕະຫຼອດມາພ້ອມທັງເນັ້ນໜັກ ແລະ ໃຫ້ທິດຊີ້ນຳຄະນະພັກ-ຄະນະນຳ ກໍຄືນາຍ ແລະ ພົນທະຫານ ຈົ່ງພ້ອມກັນຮັກສາຄວາມສາມັກຄີຮັກແພງເຊິ່ງກັນແລະກັນ, ຕ້ານປາກົດການຫຍໍ້ທໍ້ຕ່າງໆທີ່ຈະເກີດຂຶ້ນ, ເອົາໃຈໃສ່ສ້າງເສດຖະກິດກົມກອງ ກໍຄືຄອບຄົວມີຄວາມເຂັ້ມແຂງ ເພື່ອເຮັດໃຫ້ຊີວິດການເປັນຢູ່ນັບມື້ດີຂຶ້ນເປັນກ້າວໆ.

**(ນາງ ອາລິນ ສຸພົມມະປະກິດ)**




# ຝົນຕົກນ້ຳຖ້ວມ

\# ດົ້ນກົບເມກ

ບັນຫາຊາວບ້ານໃນນະຄອນຫຼວງ ຍາມຝົນຕົກແຮງເວລາກາງຄືນ ຫຼາຍບ່ອນປະຊາຊົນບໍ່ໄດ້ນອນ ຫຼື ນອນຫຼັບ ກໍຈຳຕ້ອງຕື່ນຂຶ້ນມາສະນ້ຳອອກຈາກເຮືອນ ເພາະນ້ຳຝົນບໍ່ສາມາດໄຫຼຕາມຮ່ອງ-ຄອງນ້ຳຂ້າງທາງ ມັນຈຶ່ງໄຫຼເຂົ້າເຮືອນຊາວບ້ານທີ່ຕ່ຳ; ໄລຍະຫຼັງມານີ້ ຮອດຍາມຝົນ ປະຊາຊົນກໍຍັງປະສົບໄພນ້ຳຖ້ວມໄຫຼເຂົ້າເຮືອນ. ຜູ້ຂຽນໄດ້ຮັບຟັງຄຳອະທິບາຍຈາກໝູ່ເພື່ອນວ່າ ທາງນະຄອນຫຼວງເພິ່ນກໍມີນະໂຍບາຍ-ຄຳສັ່ງໃຫ້ໂຍທາແຕ່ລະເມືອງເອົາໃຈໃສ່ ລອງຄອງລະບາຍນ້ຳ ໂດຍສະເພາະແກ້ໄຂຢູ່ໃນບ່ອນເຂດປະຊາຊົນ ໂທແຈ້ງທີ່ມີຄອງນ້ຳຕັນ ຫຼື ທໍ່ນ້ຳລະບາຍຕັນ ນ້ຳກໍລົງບໍ່ໄດ້.

ການບຳບັດທຸກຂອງປະຊາຊົນ ບຳລຸງສຸກໃຫ້ປະຊາຊົນເລື່ອງນ້ຳຖ້ວມຂັງ-ລອງຄອງລະບາຍນ້ຳນັ້ນ ຈຶ່ງຝາກເຖິງຝ່າຍການຈັດຕັ້ງກ່ຽວຂ້ອງຊ່ວຍແກ້ໄຂປະຊາສຳພັນແຈ້ງການໃຫ້ປະຊາຊົນຮັບຮູ້-ຮູ້ຈັກໂທແຈ້ງ-ລາຍງານບັນຫານ້ຳຖ້ວມ ເພາະຕາມທີ່ຜູ້ຂຽນໄດ້ຍິນມາກໍແມ່ນບັນຫາປະຊາຊົນຫຼາຍບ່ອນທີ່ບໍ່ຮູ້ຈະໂທແຈ້ງໄປໃສ-ບ່ອນໃດຮັບຜິດຊອບ; ການລອງທໍ່ນ້ຳລະບາຍຕາມຂອບທາງນັ້ນ ແມ່ນຫົວໃຈສຳຄັນ ເພາະເວລາຍາມຝົນຕົກ ນ້ຳບໍ່ສາມາດໄຫຼລົງໄດ້-ໄຫຼບໍ່ທັນກໍລົ້ນອັ່ງຖ້ວມໃສ່ບ້ານເຮືອນທີ່ຢູ່ຕ່ຳ ເກີດບັນຫາສັບສົນທັງຫາກິນຢູ່ຍາກແລ້ວ ຍັງບໍ່ໄດ້ຫຼັບນອນຍ້ອນນ້ຳຖ້ວມເຮືອນ.

ນ້ຳຖ້ວມຍ້ອນຝົນຕົກລົນ ນ້ຳບໍ່ໄຫຼ-ບັນຫາຄອງນ້ຳ-ທໍ່ນ້ຳຕັນ ບາງທີກໍພາໃຫ້ຄິດຮອດແຜນເມືອງເກົ່າກ່ອນ ທີ່ມີຮ່ອງນ້ຳລຳຄອງ-ຫ້ວຍໜອງຄອງບຶງນ້ຳໄຫຼສະດວກ ແຕ່ປັດຈຸບັນນີ້, ຍ້ອນການຂະຫຍາຍເຂດພັດທະນາ-ປຸກອາຄານ ປັບປຸງຖະໜົນຫົນທາງ ບາງຄັ້ງກໍໄດ້ທາງດີ ແຕ່ສູນເສຍຄອງນ້ຳເກົ່າ, ໄດ້ເຂດພັດທະນາຕຶກອາຄານງາມ ແຕ່ກໍມີການສູນເສຍຜັງເມືອງເກົ່າທີ່ລະບາຍນ້ຳໄດ້ດີ ພາໃຫ້ຄິດເຫັນວ່າການພັດທະນາເຮົາຈະເອົາທັງເສດຖະກິດ-ວັດທະນະທຳແລະຄວາມຍືນຍົງໄປພ້ອມກັນນັ້ນ ມັນຮຽກຮ້ອງເຖິງການວາງແຜນໄລຍະຍາວ ຖືກຕ້ອງ-ສອດຄ່ອງກັບທຳມະຊາດ!.








ຣສ. ແສງຝ້າ ໂຫລານຸພາບ

# ແຕກໂຕນ - ແຕກຕ່າງ

'ແຕກໂຕນ' ແລະ 'ແຕກຕ່າງ' ທັງສອງຄຳນີ້ເປັນຄຳກິລິຍາ ທີ່ມີລັກສະນະເປັນຄຳປະສົມ ເຊິ່ງມີຄຳວ່າ 'ແຕກ' ທີ່ໝາຍເຖິງ "ແຍກສ່ວນອອກຈາກສ່ວນທີ່ເປັນກ້ອນ" ຢູ່ໜ້າ. ແຕ່ຄວາມໝາຍຂອງຄຳທັງສອງຈະເນັ້ນຢູ່ຄຳທ້າຍ ຄື 'ໂຕນ' ແລະ 'ຕ່າງ'.

'ໂຕນ' ມີຄວາມໝາຍວ່າ "ຫຼຸດຫຼາຍ". ຖ້າຕື່ມຄຳວ່າ 'ກັນ' ຕໍ່ທ້າຍ ເປັນ 'ໂຕນກັນ' ກໍໝາຍເຖິງ "ຫຼຸດກັນຫຼາຍ, ບໍ່ສະເໝີກັນໂພດ, ບໍ່ທໍ່ກັນໂພດ" ເຊັ່ນ

- ອາຍຸຂອງຜົວເມຍຄູ່ນີ້ໂຕນກັນຫຼາຍ ຜົວອາຍຸ 59 ປີ ເມຍອາຍຸ 19 ປີ.
- ລາຄາສິ້ນໄໝສອງຜືນນີ້ໂຕນກັນຫຼາຍ ຜືນສີແດງ 2 ແສນກີບ, ຜືນສີຟ້າ 3 ລ້ານກີບ.

ສ່ວນຄຳວ່າ 'ຕ່າງ' ມີຄວາມໝາຍວ່າ "ບໍ່ຄື, ຜິດແປກ, ອື່ນ". ຖ້າຕື່ມຄຳວ່າ 'ກັນ' ຕໍ່ທ້າຍ ເປັນ 'ຕ່າງກັນ' ກໍໝາຍເຖິງ "ບໍ່ຄືກັນ, ຜິດແປກກັນ" ເຊັ່ນ

- ຂ້ອຍກັບເຈົ້າມັກອາຫານຕ່າງກັນ.
- ພາສາລາວຕ່າງກັນກັບພາສາຫວຽດ.
- ພາສາປາລີ ແລະສັນສະກິດບໍ່ຕ່າງກັນຫຼາຍປານໃດ.

ເມື່ອ 'ໂຕນ' ແລະ 'ຕ່າງ' ເປັນຄຳປະສົມໂດຍເອົາຄຳວ່າ 'ແຕກ' ມາຢູ່ຕໍ່ໜ້າ ກໍກາຍເປັນ 'ແຕກໂຕນ' ແລະ 'ແຕກຕ່າງ' ເຊິ່ງຄວາມໝາຍກໍຍັງຄືກັບ 'ໂຕນ' ແລະ 'ຕ່າງ' ພຽງແຕ່ເມື່ອເປັນຄຳປະສົມ ຄວາມໝາຍຂອງຄຳສັບຈະໜັກແໜ້ນກວ່າ:

'ແຕກໂຕນ' ມີຄວາມໝາຍວ່າ "ແຕກຕ່າງກັນຫຼາຍເກີນໄປ" ເຊັ່ນ

- ລາຍໄດ້ຂອງນັກທຸລະກິດ ສົມທຽບໃສ່ພະນັກງານລັດແລ້ວແມ່ນແຕກໂຕນກັນຫຼາຍ.
- ປັດຈຸບັນມີການແຕກໂຕນກັນທາງດ້ານການສຶກສາ ລະຫວ່າງຕົວເມືອງ ແລະ ຊົນນະບົດ.
- ອາຊຽນກ່າວເນັ້ນວ່າຈະສຸມໃສ່ຫຼຸດຄວາມແຕກໂຕນກັນດ້ານການພັດທະນາລະຫວ່າງປະເທດສະມາຊິກໃຫ້ໜ້ອຍລົງ.

"ແຕກຕ່າງ" ມີຄວາມໝາຍວ່າ "ບໍ່ຄືກັນ, ຕ່າງກັນ" ເຊັ່ນ

- ຄວາມຄິດເຫັນຂອງສອງຄົນນີ້ແຕກຕ່າງກັນ.
- ສອງທັດສະນະ ເຖິງວ່າຄືກັນ ແຕ່ຍັງແຕກຕ່າງກັນໃນຫຼາຍສ່ວນປີກຍ່ອຍ.
- ລະບົບສຽງພາສາລາວ ແລະລະບົບສຽງພາສາຈີນ ແຕກຕ່າງກັນຫຼາຍສົມຄວນ.




# ວິທີເຮັດວຽກ

**ພາກທີ 6**

**ວິທີນຳ**

ນັ້ນກໍແມ່ນວິທີໜຶ່ງທີ່ວ່າ: ຜູ້ນຳປະສົມປະສານກັບປະຊາຊົນ. ຍົກຕົວຢ່າງກໍຄື: ການກວດກາພະນັກງານໃນໂຮງຮຽນໜຶ່ງ, ຖ້າວ່າຜູ້ນຳຫາກລະດົມພະນັກງານທັງໝົດ ແລະ ນັກຮຽນທັງໝົດ ໃນໂຮງຮຽນນັ້ນເຂົ້າຮ່ວມໃນການກວດການັ້ນ ແລະ ພະນັກງານ ກວດກາຊັ້ນສູງ ຮູ້ເຮັດການນຳພາຢ່າງຖືກຕ້ອງຕາມວິທີທີ່ວ່າ ຜູ້ນຳປະສົມປະສານກັບປະຊາຊົນນັ້ນ, ການກວດກາຕ້ອງໄດ້ຮັບຜົນດີ ຢ່າງແນ່ນອນ.

ບໍ່ວ່າທ້ອງຖິ່ນໃດ ບໍ່ວ່າອົງການໃດ ບ່ອນມັກມີວຽກງານຫຼາຍອັນເກີດຂຶ້ນໃນເວລາດຽວກັນ, ໃນເວລານັ້ນ ມັນກໍຍ່ອມມີວຽກ ການອັນສຳຄັນກວ່າໝູ່ ແລະ ມີອັນສຳຄັນຮອງລົງມາ. ຜູ້ນຳທີ່ຢູ່ທ້ອງຖິ່ນນັ້ນ ຫຼື ວ່າອົງການຮັບຜິດຊອບຢູ່ໃນທ້ອງຖິ່ນນັ້ນຕ້ອງພິຈາລະນາສະພາບການແວດລ້ອມໃຫ້ຄັກ ເພື່ອວາງວຽກການໃຫ້ຖືກ. ວຽກອັນໃດເປັນຕົ້ນຕໍ ວຽກອັນໃດເປັນອັນດ່ວນຮ້ອນ ກໍໃຫ້ເຮັດກ່ອນ ບໍ່ຄວນກະຟຸບກະຟາບແບບບໍ່ມີແຜນການແບບພົບອັນໃດເຮັດອັນນັ້ນ, ມັນຈະກາຍເປັນວຽກອັນໃດກໍເປັນວຽກຕົ້ນຕໍປົນເປກັນໝົດ ບໍ່ມີຖ້ານມີຖັນ.

ກ່ຽວກັບແຕ່ລະທ້ອງຖິ່ນແຕ່ລະສຳນັກງານ, ຜູ້ທີ່ເປັນຜູ້ນຳໃນຊັ້ນສູງ ຕ້ອງພິຈາລະນາເບິ່ງສະຖານະການ, ເບິ່ງສະພາບການແວດລ້ອມ ເບິ່ງເງື່ອນໄຂຂອງໝົດທັງທ້ອງຖິ່ນນັ້ນໃຫ້ຄັກໆ ແລ້ວຈຶ່ງຕົກລົງວ່າວຽກອັນໃດເປັນວຽກຕົ້ນຕໍ. ສຳລັບໄລຍະໜຶ່ງໆ ເມື່ອໃດຫາກຕົກລົງແລ້ວກໍຕ້ອງປະຕິບັດຈົນສຸດຂີດເພື່ອໃຫ້ໄດ້ຮັບຜົນຕາມຄາດໝາຍ, ນັ້ນກໍແມ່ນວິທີນຳແບບປະສານກັບປະຊາຊົນ ແລະແບບນະໂຍບາຍປະສານກັບການທົດລອງແຕ່ລະແຫ່ງ. ສິ່ງທີ່ເວົ້າມາເທິງນັ້ນ ແມ່ນຫຼັກການໃຫຍ່ໃນການນຳ, ພະນັກງານຜູ້ຮັບຜິດຊອບຕ້ອງເຮັດໃຫ້ຖືກຕາມຫຼັກການ ແລະຕາມແນວທາງດັ່ງກ່າວນີ້ພ້ອມກັນນັ້ນກໍຕ້ອງຕັ້ງໃຈຄຶດຮ່ຳພິຈາລະນາຊອກເພື່ອເພີ່ມທະວີຫົວຄິດປະດິດຂອງຕົນ.

ອ່ານຕໍ່ສະບັບໜ້າ...

# ຂຽນຄຳລາວໃຫ້ຖືກ

\#ຄູແສງ

| ຖືກ | ຜິດ |
| --- | --- |
| ຂີ້ຄ້ຽ | ຂີ້ທ້ຽ |
| ເບື້ອທີ່ | ເບື້ອຄີ່ |
| ສຸບເກີບ | ຊຸບເກີບ |
| ຊຸບຜັກ | ສຸບຜັກ |
| ເສື່ອມເສຍ | ເຊື່ອມເສຍ |
| ເຊື່ອມໂຍງ | ເສື່ອມໂຍງ |
| ຫຍ່ອມຫຍ້າ | ຍ່ອມຫຍ້າ |
| ຍ່ອມດີ | ຫຍ່ອມດີ |
| ເຫຼື້ອມໃສ | ເລື້ອມໃສ |
| ເລື່ອມລ້ຳ | ເຫຼື້ອມລ້ຳ |



ສຸກສະບາຍທາຍໂລດ

# ອາໂວຄາໂດຊ່ວຍໃຫ້ມີດລູກແຂງແຮງ

ໂດຍ: ທິວາກະທີ



ການກິນໝາກອາໂວຄາໂດອາທິດລະໜ່ວຍ ຈະເຮັດໃຫ້ມີດລູກແຂງແຮງແລະປະຈຳເດືອນມາປົກກະຕິ ຊ່ວງເວລາທີ່ໃກ້ຈະເປັນປະຈຳເດືອນ ເປັນຊ່ວງທີ່ສາວໆຕ້ອງລະວັງເລື່ອງອາຫານເປັນພິເສດເພື່ອໃຫ້ມີດລູກມີສຸຂະພາບທີ່ດີ ແນະນຳໃຫ້ກິນອາຫານທີ່ຊ່ວຍຂັບສານພິດແລະເຮັດໃຫ້ປະຈຳເດືອນມາເປັນປົກກະຕິເຊິ່ງໝາກອະໂວກາໂດມີຂະໜາດຂ້ອນຂ້າງໃຫຍ່ ມີເນື້ອເປັນສີເຫຼືອງຂຽວ ລັກສະນະເປັນຄຣີມ ແລະຍັງອຸດົມໄປດ້ວຍສານອາຫານຫຼາຍຢ່າງ ມີທັງວິຕາມິນຊີ, ອີ, ດີ ແລະ ກົດໄຂມັນໂອເມກ້າ 3 ທີ່ຊ່ວຍໃນເລື່ອງຜິວ, ບຳລຸງເລັບແລະແຂ້ວ ລວມທັງບຳລຸງເສັ້ນຜົມທີ່ແຫ້ງແຕກປາຍ ໃຫ້ກັບມາມີສຸຂະພາບດີອີກຄັ້ງ.

ໃນການວິໄຈພົບວ່າ ຜູ້ຍິງທີ່ກິນອະໂວກາໂດ 1 ໜ່ວຍໃນທຸກອາທິດ ຈະມີປະລິມານຮໍໂມນທີ່ສົມດຸນກວ່າຜູ້ຍິງທີ່ບໍ່ກິນ; ດັ່ງນັ້ນ, ການກິນອາໂວກາໂດຈະຊ່ວຍເຮັດໃຫ້ປະຈຳເດືອນມາປົກກະຕິ ແລະ ມີດລູກແຂງແຮງ.

**ຂໍ້ມູນຈາກ: www.laopost.com**



ອາດ ກະວີລາວ

# ເມື່ອອຳນາດໃໝ່ມາມື

**(ເນື່ອງໃນວັນຢຶດອຳນາດ 23 ສິງຫາ)**

**# ຊຽງເອງ**

❊ ຢຶດອຳນາດຂາດຂັ້ນ
ທີ 23 ສິງຫາ
ປວງປະຊາຊາວເຊື້ອ
ເມື່ອຫຼຸດພົ້ນຜ່ານຂ້າມ
ມາຢູ່ໃນມືແລ້ວນັ້ນ
ລືກ້ອງງາມໄຊກ້າ
ດີໃຈຊົມຊື່ນ
ເມືອງຂຶ້ນຕ່າງແດນ

❊ ແສນເດືອດຮ້ອນ
ປະຕິການ
ເລວົກຮ້າຍ
ດາບຢູ່ເໜືອຄໍຢູ່ໃຕ້ ປະຊາທີປະໄຕແອບອ້າງ
ທົນທຸກທໍລະມານ ຄາວນັ້ນ
ລູກມືເມືອງຂຶ້ນ
ທຳລາຍຜູ້ຄິດຕ່າງ
ວາງໄວ້ເພື່ອລວງ

❊ ແມ່ງເມື່ອອຳນາດເຂົ້າ
ໝັ້ນຮັກສາດູແລ
ເປັນເຄື່ອງມືຄົມເຂັ້ມ
ປາບປາມມານໝູ່ຮ້າຍ
ເປົ້າຢູ່ມືປະຊາ ເຮົານັ້ນ
ໃຫ້ແກ່ນຄົງແຂງກ້າ
ຜະເດັດການກຳມາຊີບ
ໃຫ້ສູນສິ້ນຈາກແຜ່ນດິນ

❊ ຢ່າໃຫ້ອາຍກິ່ນຮ້າຍ
ສິ່ງກິ່ນເໝັນຄືນມາ
ສໍ້ລາດບັງຫລວງນັ້ນ
ຕ້ອງເອົາມັນມອດມ້ຽນ
ລະບອບເນົ່າປະຕິການ
ກົດຂວາງຄວາມກ້າວ
ພົ້ນທຸກຳລະບອບເກົ່າ
ຕາຍຜ້ອມລະບອບຫຼັງ

❊ ທຸກຢ່າງເຮັດໃຫ້ໄດ້
ຊື່ສັດບໍລິສຸດ
ສາມັກຄີຄືເສົາຄ້ຳ
ພັກນຳພາ-ລັດຄຸ້ມຄອງຍຶດໝັ້ນ
ຄືດັ່ງປະຕິຍານ
ໂປ່ງໃສຈະແຈ້ງ
ເປັນໃຈດຽວເດັດດ່ຽວ
ເດີນໜ້າພັດທະນາ

❊ ສ້າງໃຫ້ດິນຖິ່ນນີ້
ກ້າວດຸ່ງໄປຕາມຍຸກ
ສົມວ່າລາວເປັນເຈົ້າ
ລົບລ້າງຄວາມທຸກໄຮ້ ມໍລະດົກຊົ່ວຮ້າຍ
ເຮືອງຮຸ່ງສີວິໄລ
ພັດທະນານຳໜ້າ
ດິນແດນເອກະລາດ
ນາຍເມືອງຂຶ້ນເຮັດມາ

❊ ຂໍຈົ່ງເບື້ອງປີນໜ້າ
ເພີ່ມທະວີກຳລັງແຮງ
ອຳນາດໃນມືແລ້ວ
ສ້າງດິນແດນຖິ່ນນີ້
ໃຈໃສ່ສາມັກຄີ
ແກ່ນແຂງຂານສູ້
ກະທຳການເດັດດ່ຽວ
ໃຫ້ທຽມເທົ່າຖິ່ນຈະເລີນແຫ່ງເດີ!



ມ່ວນຊື່ນ ສະບາຍ

**(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)**

**# ສົ້ຽມຫ້ຽນ**

❊ **23** ສິງຫາ ປະຫວັດຈາລຶກໄວ້ ຜົນງານໃຫຍ່ ປວງຊົນລາວ ເຕົ້າໂຮມຄວາມສາມັກຄີ ອາດຫານຕໍ່ຕ້ານ ທວງສິດອິດສະຫຼະພາບ ຜືນແຜ່ນດິນອັນລ້ຳຄ່າ ປົດແອກ ເພື່ອຫຼຸດພົ້ນ ອອກຈາກການເປັນຂ້ອຍຂ້າ ປະຊາສຸກຊື່ນ ຊ້ອຍ ສາກົບຮູ້ທົ່ວເຖິງ **ຂອບແລ້ວ!**

❊ **ທະຍັບ**ມໍ່ໃກ້ການເປີດສົກຮຽນໃໝ່ຫຼາຍໂຮງຮຽນ ກໍໄດ້ກະກຽມຄວາມພ້ອມ ທັງພໍ່ແມ່ ແລະ ນ້ອງນັກຮຽນ ກໍເຊັ່ນດຽວກັນ ພາກັນຫາຊອກຊື້ອາພອນໃໝ່ຜືນງາມ ທັງສໍສີປາກກາ ເຄື່ອງຊຽນກຽມພ້ອມ ມີແຕ່ຄອງຄອຍຖ້າ 1 ກັນຍາປະກາດປ່າວ ພາລູກເຂົ້າສູ່ຮົ້ວ ໂຮງຮຽນບົ້ນບ່ອນ ໝາຍ **ເຈົ້າເອີຍ!**

## ຊອບຍິ້ມ

**# ແອ່ນຕຸ້ງ**

### ເລື່ອງ: ຂອບໃຈທີ່ຍ້ອງ

ຊາຍໜຸ່ມຄົນໜຶ່ງອ່ານໜັງສືພິມ ແລ້ວພົບເຫັນຂ່າວດາລາສາວງາມຄົນໜຶ່ງແຕ່ງງານກັບນັກກິລາຄົນໜຶ່ງ ທີ່ໂອຄິວຂອບຂ້າງຕ່າຄົນໜຶ່ງ ລາວຈຶ່ງປິ້ນໄປເອົ້າກັບເມຍລາວວ່າ:

"ເປັນຫຍັງຜູ້ຊາຍໂງ່ໆ ຈຶ່ງມັກໄດ້ເມຍງາມເນາະ"

"ບໍ່ວ່າຈະດ້ອຍເຫດຜົນຫຍັງກະຕາມເທາະ ແຕ່ຈັ່ງໃດກະຂອບໃຈທີ່ຍ້ອງ" ຜູ້ເປັນເມຍຕອບ!!!!!!!







## ຄະຕິເຕືອນໃຈ

**# ດອກຫຍ້າ**

ຢ່າດີແຕ່ຄິດ ແຕ່ຈົ່ງຄິດດີ
ຢ່າດີແຕ່ເວົ້າ ແຕ່ຈົ່ງເວົ້າໃຫ້ດີ
ຢ່າດີແຕ່ເຮັດ ແຕ່ຈົ່ງເຮັດດີ
ຢ່າດີແຕ່ເປັນຄົນ ແຕ່ຈົ່ງເປັນຄົນທີ່ດີ




# ມາລາວີ ເຜີຍແຜ່ກຳນົດ ການເລືອກຕັ້ງທົ່ວໄປປີ 2025

ວັນສຸກທີ 02 ສິງຫາ ຜ່ານມາ, ຄະນະກຳມະການການເລືອກຕັ້ງຂອງມາລາວີ (Malawi Electoral Commission - MEC) ໄດ້ເຜີຍແຜ່ຕາຕະລາງການເລືອກຕັ້ງທົ່ວໄປຂອງປະເທດໃນປີໜ້າ ເຊິ່ງມີກຳນົດຈະຈັດຂຶ້ນໃນວັນທີ 16 ກັນຍາ 2025.

ຜູ້ພິພາກສາ ທ່ານ ນາງ ແອນນາເບວ ມະຕາລິມັນຈາ (Annabel Mtalimanja) ປະທານ MEC ຍັງໄດ້ປະກາດວ່າ ຄະນະກຳມະການຈະດຳເນີນການລົງທະບຽນຜູ້ມີສິດເລືອກຕັ້ງ ຕັ້ງແຕ່ເດືອນກັນຍາຫາເດືອນທັນວາ, ໃນ 3 ໄລຍະ ໄລຍະລະ 14 ວັນ ທົ່ວປະເທດ.

ນາງກ່າວວ່າ ໃນປັດຈຸບັນ, ຄະນະກຳມະການຮ່ວມກັບອົງການທະບຽນແຫ່ງຊາດ (National Registration Bureau) ພວມດຳເນີນການລົງທະບຽນ ເພື່ອຮັບປະກັນວ່າຊາວມາລາວີທຸກຄົນທີ່ມີອາຍຸ 18 ປີຂຶ້ນໄປ ຫຼື ຜູ້ອາຍຸຕ່ຳກວ່າ 18 ປີ, ແຕ່ຈະຄົບ 18 ປີໃນວັນເລືອກຕັ້ງ ໄດ້ຮັບບັດປະຈຳຕົວ; ທ່ານກ່າວເນັ້ນວ່າ, ມີແຕ່ພົນລະເມືອງມາລາວີທີ່ມີບັດປະຈຳຕົວຂອງປະເທດ ຫຼືພົນລະເມືອງຕ່າງຊາດທີ່ຢູ່ໃນປະເທດເປັນເວລາ7ປີຕິດຕໍ່ກັນເທົ່ານັ້ນ ທີ່ຈະໄດ້ຮັບອະນຸຍາດໃຫ້ລົງຄະແນນສຽງໃນການເລືອກຕັ້ງລັດຖະບານທ້ອງຖິ່ນ, ສະພາແຫ່ງຊາດ ແລະ ປະທານາທິບໍດີ ໃນປີ 2025.

ຄະນະກຳມະການຈະປະກາດຄ່າທຳນຽມການສະເໜີຊື່ ສຳລັບຜູ້ເຂົ້າແຂ່ງຂັນໃນເດືອນພະຈິກ; ໃນຂະນະທີ່ເອກະສານການສະເໜີຊື່ຂອງຜູ້ລົງສະໝັກຮັບເລືອກຕັ້ງລັດຖະບານທ້ອງຖິ່ນ, ສະພາແຫ່ງຊາດ ແລະ ປະທານາທິບໍດີ ຈະອອກໃນເດືອນເມສາ, ພຶດສະພາ ແລະ ມິຖຸນາ ຕາມລຳດັບ.

MEC ໄດ້ຮຽກຮ້ອງໃຫ້ບັນດາພັກການເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງໃນການເລືອກຕັ້ງສະແດງຄວາມຄິດເຫັນກ່ຽວກັບການໂຄສະນາຫາສຽງໂດຍສັນຕິ ກ່ອນການເລືອກຕັ້ງໃນເດືອນກັນຍາ 2025.

**ແຫຼ່ງຂ່າວ: ຊິນຮວາ**




# ອູການດາ ປະກາດວັນເລືອກຕັ້ງ ປະທານາທິບໍດີ ແລະ ລັດຖະສະພາ ໃນປີ 2026

ວັນພຸດທີ 31 ກໍລະກົດ ຜ່ານມາ, ຄະນະກຳມະການການເລືອກຕັ້ງຂອງອູການດາ ໄດ້ເປີດເຜີຍແຜນງານການເລືອກຕັ້ງສະບັບປັບປຸງ ໂດຍປະກາດວັນເລືອກຕັ້ງປະທານາທິບໍດີ ແລະ ລັດຖະສະພາ ໃນປີ 2026.

ຜູ້ພິພາກສາ ທ່ານ ໄຊມອນ ບາຍບາກາມາ (Simon Byabakama) ປະທານຄະນະກຳມະການການເລືອກຕັ້ງ ກ່າວວ່າ: ການສະເໜີຊື່ສຳລັບການເລືອກຕັ້ງປະທານາທິບໍດີ ແລະ ລັດຖະສະພາ ຈະດຳເນີນໃນລະຫວ່າງວັນທີ 17 ກັນຍາ ຫາ ວັນທີ 03 ຕຸລາ 2025, ການໂຄສະນາຫາສຽງຈະເລີ່ມຕົ້ນໃນອາທິດທີ2ຂອງເດືອນຕຸລາ2025 ໂດຍການປ່ອນບັດເລືອກຕັ້ງປະທານາທິບໍດີ ແລະ ລັດຖະສະພາ ຈະຈັດຂຶ້ນໃນວັນທີ12ມັງກອນ 2026.



ທ່ານ ໄຊມອນ ບາຍບາກາມາ

ຜູ້ສະໝັກຊິງຕຳແໜ່ງປະທານາທິບໍດີ ທັງໝົດ 11 ທ່ານ ລວມທັງປະທານາທິບໍດີຄົນປັດຈຸບັນ ທ່ານ ໂຢເວຣີ ມູເຊເວນີ (Yoweri Museveni) ອາຍຸ 79 ປີ ໄດ້ຮັບການສະເໜີຊື່ລົງແຂ່ງຂັນ, ໂດຍການເລືອກຕັ້ງທົ່ວໄປປີ 2021 ທ່ານເປັນຜູ້ຊະນະດ້ວຍຄະແນນສຽງ 58.64 ເປີເຊັນ, ເອົາຊະນະຄູ່ແຂ່ງຄົນສຳຄັນຄືທ່ານ ໂຣເບີດ ຄາຍກູລານຢີ (Robert Kyagulanyi) ຫຼື ທີ່ຮູ້ຈັກໃນຊື່ Bobi Wine ນັກດົນຕີຊື່ດັງທີ່ຜັນຕົວເອງມາເປັນນັກການເມືອງ ໄດ້ຮັບ 34.83 ເປີເຊັນຂອງຄະແນນສຽງທັງໝົດ.

**ແຫຼ່ງຂ່າວ: ຊິນຮວາ**

# ລັດຖະສະພາອິຕາລີ ຜ່ານກົດລະບຽບ ເພື່ອຜ່ອນຄາຍຄວາມແອອັດໃນຄຸກ


ຄຸກໂບນຊາໂນ (Bolzano) ໃນພາກເໜືອຂອງອິຕາລີ

ວັນພຸດທີ 07 ສິງຫາ ຜ່ານມາ, ສະພາຕ່ຳ ຫຼື ສະພາຜູ້ແທນປະຊາຊົນ ຂອງອິຕາລີ ໄດ້ໃຫ້ການອະນຸມັດຂັ້ນສຸດທ້າຍຕໍ່ກັບມາດຕະການຕ່າງໆທີ່ມີຈຸດປະສົງເພື່ອຜ່ອນຄາຍຄວາມແອອັດໃນຄຸກ; ກົດໝາຍດັ່ງກ່າວຜ່ານດ້ວຍຄະແນນເຫັນດີ 153 ສຽງ, ຄັດຄ້ານ 89 ສຽງ, ແລະ ງົດອອກສຽງ 1 ສຽງ ພາຍຫຼັງໄດ້ຮັບການຮັບຮອງຈາກສະພາສູງແລ້ວ.

ມາດຕະການໃໝ່ນີ້ ໄດ້ຮັບການສະເໜີຄັ້ງທຳອິດໂດຍຄະນະລັດຖະມົນຕີຂອງນາຍົກລັດຖະມົນຕີຍິງ ຈໍຈາ ເມໂລນີ (Giorgia Meloni) ເມື່ອຕົ້ນເດືອນກໍລະກົດນີ້ ຜ່ານດຳລັດ, ການເຄື່ອນໄຫວດັ່ງກ່າວມີຂຶ້ນທ່າມກາງຄວາມເປັນຫ່ວງກ່ຽວກັບການເພີ່ມຂຶ້ນຂອງກໍລະນີຂ້າຕົວຕາຍໃນໝູ່ນັກໂທດຢູ່ຄຸກທົ່ວອິຕາລີ.

ຜູ້ກວດກາຄຸກ (prison ombudsman) ອິຕາລີ ລາຍງານວ່າ: ມາຮອດວັນທີ 06 ສິງຫາ ປີນີ້, ມີນັກໂທດ 61 ຄົນ ໄດ້ຂ້າຕົວຕາຍ ເຊິ່ງເປັນຕົວເລກທີ່ສູງເມື່ອທຽບໃສ່ 40 ກໍລະນີ ໃນໄລຍະດຽວກັນຂອງປີ 2023; ຕາມສະຖິຕິຂອງກະຊວງຍຸຕິທຳ, ມາຮອດວັນທີ 31 ກໍລະກົດຜ່ານມາ, ຄຸກຂອງອິຕາລີໄດ້ຮັບນັກໂທດ 61,133 ຄົນ ເມື່ອທຽບໃສ່ຄວາມສາມາດຮອງຮັບຂອງທາງການ 51,207 ຄົນ.

ພາຍໃຕ້ກົດໝາຍ, ສູນຮັກສາຄວາມປອດໄພຕ່ຳ ເຊັ່ນ ຊຸມຊົນບຳບັດ ຈະຮອງຮັບນັກໂທດບາງປະເພດເຊັ່ນ: ຜູ້ຕິດຢາເສບຕິດ ແລະ ຜູ້ທີ່ຮັບໂທດໄລຍະສັ້ນ ຫຼື ຖືກຄຸກຍ້ອນຄວາມຜິດທີ່ບໍ່ຮຸນແຮງ.

ນັກໂທດທົ່ວໄປ ຜູ້ທີ່ບໍ່ໄດ້ຮັບໂທດຢູ່ໃນຄຸກທີ່ມີການຮັກສາຄວາມປອດໄພສູງ ຈະໄດ້ຮັບອະນຸຍາດໃຫ້ໂທລະສັບ6ຄັ້ງຕໍ່ເດືອນ ແທນທີ່ຈະເປັນ 4 ຄັ້ງ; ນອກຈາກນີ້, ຍັງມີມາດຕະການເລັກນ້ອຍອື່ນໆ ເພື່ອຜ່ອນຄາຍຊີວິດການເປັນຢູ່ຂອງເຂົາເຈົ້າ.

ກົດໝາຍສະບັບໃໝ່ນີ້ ຈະປັບປຸງຂັ້ນຕອນການປ່ອຍຕົວກ່ອນກຳນົດ ແລະ ອະນຸຍາດໃຫ້ມີການຮັບສະໝັກຜູ້ຄຸມຄຸກແລະຜູ້ຈັດການຄຸກ ເພີ່ມອີກ 1,000 ຄົນເພື່ອເພີ່ມຈຳນວນບຸກຄະລາກອນພາຍໃນປີ 2026 ເນື່ອງຈາກການມີພະນັກງານໜ້ອຍ ເປັນອີກບັນຫາໜຶ່ງທີ່ສົ່ງຜົນກະທົບຕໍ່ລະບົບຄຸກຂອງອິຕາລີ; ອີງຕາມຂໍ້ມູນຂອງກົມຄຸ້ມຄອງຄຸກ, ພະນັກງານຄຸກຂອງອິຕາລີ ປະກອບດ້ວຍເຈົ້າໜ້າທີ່ປະມານ 37,700 ຄົນ ເຊິ່ງໜ້ອຍກວ່າຈຳນວນທີ່ຕ້ອງການ 42,850 ຄົນ.

ໃນປີ 2013, ສານສິດທິມະນຸດຂອງເອີຣົບ ໄດ້ປັບໃໝອິຕາລີ ສຳລັບການລະເມີດສິດທິຂອງນັກໂທດໂດຍການກັກຂັງພວກເຂົາໄວ້ໃນສະຖານທີ່ທີ່ຄັບແຄບເກີນໄປ.

**ແຫຼ່ງຂ່າວ: ຊິນຮວາ**

## ສະຫາຍ ສົມມາດ...

(ຕໍ່ຈາກໜ້າ 1)

ຮ່ວມຍຸດທະສາດຮອບດ້ານໝັ້ນຄົງ ຍາວນານ ຕາມທິດ 4 ດີ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມລາວ-ຈີນ, ຈີນ-ລາວ ໃຫ້ແໜ້ນແຟ້ນຍິ່ງໆຂຶ້ນ.

ສຳລັບການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ນະຄອນເຊັຍເໜີນ ໃນຕໍ່ໜ້າ, ສະຫາຍ ສົມມາດ ພົລເສນາ ສະເໜີໃຫ້ສືບຕໍ່ແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆນຳກັນ; ຈັດເຝິກອົບຮົມດ້ານວິຊາການຮ່ວມກັນ ທີ່ຕິດພັນກັບການແລກປ່ຽນຂໍ້ມູນແລະບົດຮຽນປະສົບການກ່ຽວກັບການຍົກລະດັບຄວາມອາດສາມາດໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ສືບຕໍ່ຊຸກຍູ້ໃຫ້ບັນດານັກທຸລະກິດ-ນັກລົງທຶນ, ປະຊາຊົນຈີນ ກໍຄືປະຊາຊົນແຂວງຝູຈ້ຽນ ເຂົ້າມາລົງທຶນຕາມຂະແໜງການທີ່ສອງຝ່າຍເຫັນວ່າມີທ່າແຮງນຳກັນ ແລະ ເຂົ້າມາທ່ອງທ່ຽວ ສປປ ລາວ ໃຫ້ຫຼາຍຂຶ້ນ.

ສະຫາຍຮອງປະທານສະພາແຫ່ງຊາດຍັງແຈ້ງໃຫ້ຊາບວ່າ ສປປ ລາວ ໄດ້ຮັບກຽດເປັນປະທານອາຊຽນ ແລະ ສະພາແຫ່ງຊາດລາວ ເປັນປະທານ ແລະ ເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ໃນກາງເດືອນຕຸລາທີ່ຈະມາເຖິງນີ້, ຫວັງວ່າຈະໄດ້ຮັບການສະໜັບສະໜູນຈາກ ສປຈີນ ເພື່ອເຮັດສຳເລັດໜ້າທີ່ດ້ວຍຜົນສຳເລັດອັນຈົບງາມ.

ສະຫາຍ ເວີ້ຍ ເຄີ້ຫຼຽງ ໄດ້ສະແດງຄວາມຂອບໃຈການຕ້ອນຮັບຢ່າງອົບອຸ່ນ ແລະ ເປັນເອກະພາບຕໍ່ຄຳຄິດເຫັນຂອງສະຫາຍຮອງປະທານສະພາແຫ່ງຊາດຕໍ່ສາຍພົວພັນມິດຕະພາບອັນເປັນມູນເຊື້ອຕາມທິດ 4 ດີ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມລະຫວ່າງສອງປະເທດ ຈີນ-ລາວ; ພ້ອມທັງແຈ້ງໃຫ້ຊາບການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ຄັ້ງນີ້ ແມ່ນຕອບຮັບຕາມການເຊື້ອເຊີນຂອງຫ້ອງວ່າການປົກຄອງແຂວງຈຳປາສັກ ເຊິ່ງສະແດງໃຫ້ເຫັນເຖິງສາຍພົວພັນທີ່ແໜ້ນແຟ້ນລະຫວ່າງສອງພັກ, ສອງລັດ ນັບແຕ່ສູນກາງຈົນເຖິງທ້ອງຖິ່ນ.

**(ອານຸສອນ ພູມມີທອນ)**

## ເບິ່ງໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ຫວຽດນາມກັບນະໂຍບາຍດຶງດູດ ນັກທ່ອງທ່ຽວ ແລະ ຊ່ຽວຊານຕ່າງປະເທດ

**"ເບິ່ງໄວ້ໄດ້ບົດຮຽນ"** ປະຈຳອາທິດນີ້ ຂໍສະເໜີຂ່າວທີ່ຄວນມີແຮໄວ້ເປັນບົດຮຽນ ຈາກຫວຽດນາມ ມີເລື່ອງການພັດທະນາການທ່ອງທ່ຽວ ແລະ ນະໂຍບາຍດຶງເພື່ອດຶງດູດເອົາຄົນຕ່າງປະເທດໄປລົງທຶນທ່ອງທ່ຽວ ຫຼື ເຮັດທຸລະກິດ. ຂໍເລີ່ມກ່ຽວກັບວຽກທ່ອງທ່ຽວທາງການຫວຽດນາມໄດ້ຕັ້ງເປົ້າໝາຍພັດທະນາຢ່າງຈິງຈັງຕັ້ງໜ້າ ເພື່ອເຮັດໃຫ້ການທ່ອງທ່ຽວຫວຽດນາມ ກາຍເປັນຂະແໜງປາຍແຫຼມແທ້ໆ ໂດຍໄດ້ກຳນົດເປົ້າໝາຍດັ່ງກ່າວເປັນ 2 ໄລຍະສຳຄັນຄື: ແຕ່ປີ 2021-2030 ເອີ້ນວ່າແຜນກຳນົດລະບົບການທ່ອງທ່ຽວໃນໄລຍະນີ້ແມ່ນເນັ້ນເຮັດໃຫ້ການທ່ອງທ່ຽວເຕີບໂຕຕາມທິດສີຂຽວ, ກາຍເປັນຈຸດນັດພົບຂອງນັກທ່ອງທ່ຽວ ກໍຄືຊາວຕ່າງປະເທດຈາກທົ່ວໂລກ ແລະ ການທ່ອງທ່ຽວ ມີມາດຕະຖານລະດັບແຖວໜ້າຂອງໂລກ. ພາຍໃນປີ 2025 ນັ້ນ, ການທ່ອງທ່ຽວຫວຽດນາມ ໄດ້ກຳນົດແຜນສູ້ຊົນດຶງດູດນັກທ່ອງທ່ຽວຕ່າງປະເທດໃຫ້ໄດ້ລະຫວ່າງ 25-28 ລ້ານເທື່ອຄົນ ແລະ ໄດ້ 35 ລ້ານເທື່ອຄົນ ເມື່ອຮອດປີ 2030. ການພັດທະນາການທ່ອງທ່ຽວໃນໄລຍະນີ້ (2021-2030) ແມ່ນເນັ້ນຄວາມຍືນຍົງ, ໄປຄຽງຄູ່ກັບການຮັກສາສິ່ງແວດລ້ອມ, ມີຄວາມທົນທານຕໍ່ສະພາບປ່ຽນແປງຂອງດິນຟ້າອາກາດ. ຕໍ່ໄປແມ່ນໄລຍະທີສອງ ທີ່ເອີ້ນວ່າ ວິໄສທັດແຕ່ນີ້ຫາປີ 2045 ເພື່ອການພັດທະນາການທ່ອງທ່ຽວໃຫ້ກາຍເປັນກຳລັງໜູນຂອງພື້ນຖານເສດຖະກິດ, ເຮັດໃຫ້ຫວຽດນາມກາຍເປັນຈຸດນັດພົບທີ່ພົ້ນເດັ່ນໜຶ່ງຂອງໂລກ ແລະ ຍືນຢູ່ແຖວໜ້າໃນພາກພື້ນອາຊີ-ປາຊີຟິກດ້ານການທ່ອງທ່ຽວ ແລະ ສູ້ຊົນເພື່ອຕ້ອນຮັບນັກທ່ອງທ່ຽວຕ່າງປະເທດ ໃຫ້ໄດ້ 70 ລ້ານເທື່ອຄົນ. ຮັບປະກັນລາຍຮັບຈາກການທ່ອງທ່ຽວໃຫ້ກວມເອົາລະຫວ່າງ 17-18% ຂອງຍອດຜະລິດຕະພັນພາຍໃນ (ຈີດີພີ). ໃນໄລຍະນີ້ ຈະມີການຄົ້ນຄວ້າພັດທະນາແຫຼ່ງທ່ອງທ່ຽວທະເລຕາມໝູ່ເກາະຕ່າງໆເສີມຂະຫຍາຍຄຸນຄ່າທາງວັດທະນະທຳ, ຕາໜ່າງການທ່ອງທ່ຽວມີການເຊື່ອມຕໍ່ກັບບັນດາເຂດມໍລະດົກແຫ່ງຊາດ ແລະ ແຫຼ່ງມໍລະດົກບັນດາປະເທດໃນພາກພື້ນ ແລະ ໃນທົ່ວໂລກ. ການທ່ອງທ່ຽວໃນໄລຍະນີ້ ຕ້ອງຕິດພັນກັບອຸດສາຫະກຳ ແລະ ວັດທະນະທຳ.

ເລື່ອງທີສອງກ່ຽວກັບນະໂຍບາຍດຶງເພື່ອດຶງດູດເອົາຊ່ຽວຊານນັກວິຊາການ ແລະ ນັກລົງທຶນຕ່າງປະເທດເຂົ້າໄປເຄື່ອນໄຫວຢູ່ຫວຽດນາມນັ້ນ ແມ່ນອີງໃສ່ຂໍ້ມູນຈາກຂ່າວໜັງສືພິມ "ປະຊາຊົນ" ມີຫົວຂໍ້ວ່າ: "ຫວຽດນາມແມ່ນປະເທດທີ່ມີຄ່າໃຊ້ຈ່າຍເໝາະສົມທີ່ສຸດໃນໂລກສຳລັບຊາວຕ່າງປະເທດ". ຂ່າວໄດ້ເວົ້າເຖິງຜົນການສຳຫຼວດຂອງອົງການ Inter Nation ໂດຍໜ່ວຍງານ Expat Insider ທີ່ບອກວ່າຫວຽດນາມແມ່ນປະເທດທີ່ມີຄ່າໃຊ້ຈ່າຍເໝາະສົມທີ່ສຸດໃນໂລກ ສຳລັບການດຳລົງຊີວິດຂອງຊາວຕ່າງປະເທດ. ຜົນສະຫຼຸບທີ່ວ່ານີ້ ໄດ້ມາຈາກການສຳຫຼວດໃນ 53 ປະເທດ, ເຂດແຄວ້ນ ເຊິ່ງຫວຽດນາມຕິດອັນດັບທີ 1 ໃນ 4 ປີຊ້ອນ. ຄຳວ່າ "ຄ່າໃຊ້ຈ່າຍເໝາະສົມ" ໝາຍຄວາມວ່າຄ່າຄອງຊີບບໍ່ແພງ, ເງິນເດືອນຄົນຕ່າງປະເທດເຫຼືອກິນເຫຼືອໃຊ້. ນອກຈາກອັນດັບທີ 1 ເລື່ອງຄ່າໃຊ້ຈ່າຍເໝາະສົມທີ່ສຸດແລ້ວ ຫວຽດນາມຍັງເປັນທີ 14 ທາງດ້ານເງື່ອນໄຂການເຮັດວຽກ ຫຼື ການປະກອບອາຊີບ (ຄືເປັນອາຊີບທີ່ມີຄວາມຫວັງ, ໝັ້ນຄົງ ແລະ ມີຜົນຕອບແທນດ້ວຍເງິນເດືອນໃນລະດັບສູງ; ຂ່າວໃຫ້ຮູ້ຕື່ມວ່າ ສຳລັບການໃຫ້ບໍລິການທີ່ຈຳເປັນສຳລັບຊາວຕ່າງປະເທດນັ້ນ ຫວຽດນາມຄອງອັນດັບທີ 29 (ການສະໜອງເຄື່ອງດິຈິຕອນ, ເຮືອນຢູ່ ແລະ ຄວາມສະດວກໃນການໃຊ້ພາສາ) ແລະ ຄອງອັນດັບທີ 40 ດ້ານຄຸນນະພາບໃນການດຳລົງຊີວິດ ນີ້ແມ່ນການສຳຫຼວດໃນ 53 ເຂດ (ໝາຍເຖິງປະເທດ ແລະ ເຂດແຄວ້ນ) ບ່ອນທີ່ມີຊາວຕ່າງປະເທດນິຍົມ ເຂົ້າໄປເຮັດວຽກ.

ຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ

ລັດຖະທຳມະນູນ

ຂໍເຊີນຊວນບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງປະກອບຄວາມຄິດເຫັນຕໍ່ການປັບປຸງລັດຖະທຳມະນູນ ສະບັບປີ 2015 ເຊິ່ງຄະນະຮັບຜິດຊອບໄດ້ຈັດຕັ້ງໜ່ວຍງານຮັບຄວາມຄິດເຫັນ, ຂໍ້ສະເໜີຜ່ານອີເມວ: laocon@nalao.la




# ເຖິງເວລາແກ້ແຄ້ນ

*# ບ່າວກະບື*

**ນັກ**ທຸລະກິດເຖົ້າ ຊື່ ຕາຕອນ ກຳລັງຈະຂາດໃຈຕາຍ. ຄົນໃນຄອບຄົວພາກັນມາຢືນລ້ອມອ້ອມຕຽງເຂົາ. ເຖົ້າຕາຕອນເວົ້າສຽງຄ່ອຍໆກັບຜູ້ເປັນເມຍວ່າ: "ເມື່ອຂ້ອຍຕາຍໄປ, ຂ້ອຍຢາກໃຫ້ເຈົ້າເອົາກັບນັກນັກທຸລະກິດ ຊື່ ຟ້າເຕີ່ນ"

"ບໍ່ໆ, ນອກຈາກເຈົ້າແລ້ວ ຂ້ອຍເອົາໃຜບໍ່ໄດ້ອີກແລ້ວ", ນາງເມຍຕອບ.

ເຖົ້າຕາຕອນ: "ແຕ່ຂ້ອຍຢາກໃຫ້ເຈົ້າເອົາລາວ"

ເມຍ: "ແຕ່ເປັນຫຍັງຈຶ່ງຢາກໃຫ້ຂ້ອຍເອົາກັບລາວ?"

ຕາຕອນ: "ຄັ້ງໜຶ່ງ, ນັກຟ້າເຕີ່ນມັນຕິດເງິນເຮົາເປັນຈຳນວນຫຼວງຫຼາຍ ແລະ ມາບັດນີ້, ມັນເຖິງເວລາທີ່ເຮົາຈະຕ້ອງແກ້ແຄ້ນມັນຄືນແລ້ວ".

# Time For Revenge

***# BAOKBU***

Old businessman Tatorn was dying. The family was standing around his bed. With a low voice he said to his wife: "When I'm dead I want you to marry businessman Fatern." No, I can't marry anyone after you replied his wife.

Tatorn: "But I want you to."
Wife: "But why?"
Tatorn: "Fatern once owed me large amount of money and now it's time for my revenge!"




● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນຳ
ທ່ານ ສິງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

ຄະນະບັນນາທິການ
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

ກອງບັນນາທິການ
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

ອອກແບບ - ຈັດໜ້າ
ທ່ານ ນາງ ກຸກກິກ ບຸດດາໄຊ